ພະຍາກອນ ອຽງຈັນ
21–29°C
ວັນສຸກ 27/11 · ເມກບາງສ່ວນ

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນສຸກ 27 ພະຈິກ 2026 · ສະບັບທີ 031 | ສະຫຼຸບຂ່າວປະຈຳວັນພະຫັດ 26 ພະຈິກ 2026 · 24 ຂ່າວ | 20 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ເສດຖະກິດ-ສັງຄົມ** · 09:30 ໂມງ · ອ່ານ 149 ຄັ້ງ

ແຈ້ງປັບລົງລາຄານ້ຳມັນເຊື້ອໄຟທຸກຊະນິດ



ແຈ້ງປັບລົງລາຄານ້ຳມັນເຊື້ອໄຟທຸກຊະນິດ ສະບັບເລກທີ 2218/ກຄພພ ລົງວັນທີ 25/11/2026 ເລີ່ມ 06:00 ໂມງເຊົ້າວັນທີ 26 ພະຈິກ 2026 ລາຍລະອຽດດັ່ງລຸ່ມນີ້:

◆ **ຂ່າວຕ່າງປະເທດ** · 13:52 ໂມງ

ລະທຶກ! ລົດບັນທຸກນ້ຳມັນເສຍຫຼັກປີ້ນ ເກີດໄຟໄໝ້ລຸກລາມໃນປະເທດອີຢິບ ເຮັດໃຫ້ມີຜູ້ເສຍຊີວິດຢ່າງໜ້ອຍ 31 ຄົນ



ເຫດການດັ່ງກ່າວເກີດຂຶ້ນບໍລິເວນຖະໜົນວົງແຫວນ ຣິງ ໂຣດ (Ring Road) ເຂດອັນ ວັຣຣ໌ຳກ (Al-Warraq) ແຂວງ ກີຊາ (Giza) ໃກ້ກັບນະຄອນຫຼວງ ໄຄໂຣ (Cairo) ໃນວັນທີ 25 ພະຈິກ 2026 ຫຼັງຈາກລົດບັນທຸກນ້ຳມັນເສຍຫຼັກປີ້ນ ກ່ອນຈະເກີດໄຟລຸກໄໝ້ຢ່າງຮຸນແຮງ ແລະແຜ່ລາມໄປຫາລົດຄັນອື່ນໆ ທີ່ສັນຈອນຜ່ານບໍລິເວນດັ່ງກ່າວ.

ລາຍງານລະບຸວ່າ ມີລົດປະມານ 27 ຄັນ ລວມທັງລົດຈັກ ຖືກໄຟໄໝ້ເສຍຫາຍ. ພາຍຫຼັງເກີດເຫດ ເຈົ້າໜ້າທີ່ໄດ້ລະດົມລົດດັບເພີງ ແລະລົດພະຍາບານຫຼາຍສິບຄັນເຂົ້າໄປຊ່ວຍເຫຼືອຜູ້ປະສົບເຫດ ພ້ອມທັງນຳສົ່ງຜູ້ບາດເຈັບໄປຮັກສາຕົວຢູ່ໂຮງໝໍໃກ້ຄຽງ.

ຕໍ່ໜ້າ 2

ໃນສະບັບນີ້

2 ຂ່າວຕ່າງປະເທດ
2 ຂ່າວພາຍໃນ
6 ເສດຖະກິດ-ສັງຄົມ
7 ເຫດການ
8 ທ່ອງທ່ຽວ
18 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
19 ແຈ້ງການ
20 ທ້າຍສະບັບ



◆ **ຂ່າວຕ່າງປະເທດ** · 11:52 ໂມງ

ນັບເປັນຄັ້ງທຳອິດ! ອຸບຫະພູມໂລກສ້າງສະຖິຕິໃໝ່ ສູງກວ່າ...

ອ່ານໜ້າ 9 ▸



◆ **ຂ່າວພາຍໃນ** · 10:08 ໂມງ

ປກສ ແຂວງອຽງຈັນ ກັກຕົວຜູ້ຖືກຫາ 4 ຄົນ ຮ່ວມກັນປຸ້ນຊັບ ພ້ອ...

ອ່ານໜ້າ 2 ▸



◆ **ຂ່າວຕ່າງປະເທດ** · 13:30 ໂມງ

“ຫຣຳ” ປະກາດຂຶ້ນພາສີຮອບໃໝ່ 14 ປະເທດຄູ່ຄ້າ...

ອ່ານໜ້າ 10 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ລະທຶກ! ລົດບັນທຸກນ້ຳມັນເສຍຫຼັກປີນ ເກີດໄຟໄໝ້ລຸກລາມໃນປ... (ຕໍ່ຈາກໜ້າ 1)

ພາຍຫຼັງເກີດເຫດ ເຈົ້າໜ້າທີ່ໄດ້ລະດົມລົດດັບເພີງ ແລະລົດພະຍາບານຫຼາຍສິບຄັນເຂົ້າໄປຊ່ວຍເຫຼືອຜູ້ປະສົບເຫດ ພ້ອມທັງລຳລຽງຜູ້ບາດເຈັບສົ່ງໂຮງໝໃກ້ຄຽງ. ຂະນະທີ່ທາງການອິຍິບກຳລັງສືບສວນຫາສາເຫດຂອງອຸບັດເຫດຄັ້ງນີ້ ລວມທັງການກວດສອບເພື່ອຢືນຢັນຕົວຕົນຂອງຜູ້ເສຍຊີວິດ.

ເຫດການຄັ້ງນີ້ສ້າງຄວາມເສຍຫາຍຢ່າງໜັກ ທັງຕໍ່ຊີວິດ ແລະ ຊັບສິນ ພ້ອມທັງສົ່ງຜົນກະທົບຕໍ່ການສັນຈອນໃນເສັ້ນທາງດັ່ງກ່າວ. ທັງນີ້ ຕົວເລກຜູ້ເສຍຊີວິດ ແລະຜູ້ບາດເຈັບ ອາດມີການປ່ຽນແປງຕື່ມອີກ ຕາມຜົນການກວດສອບ ແລະຢືນຢັນຈາກທາງການ.

ທີ ມ າ : Reuters/Ahram Online/cnn

ຂ່າວພາຍໃນ

ຂ່າວພາຍໃນ · 10:08 ໂມງ · ອ່ານ 18 ຄັ້ງ

ປກສ ແຂວງວຽງຈັນ ກັກຕົວຜູ້ຖືກຫາ 4 ຄົນ ຮ່ວມກັນປຸ້ນຊັບ ພ້ອມເກັບກູ້ເຄື່ອງຂອງກາງຄືນໄດ້ຈຳນວນໜຶ່ງ



ວັນທີ 12 ຕຸລາ 2026 ເຈົ້າໜ້າທີ່ຕຳຫຼວດ ກອງບັນຊາການ ປກສ ແຂວງວຽງຈັນ ໄດ້ຮັບແຈ້ງຄວາມຈາກຜູ້ເສຍຫາຍ 2 ຄົນ ວ່າຖືກກຸ່ມຄົນຮ້າຍປຸ້ນຊັບ ຢູ່ເຂດເສັ້ນທາງສວນກ້ວຍ ລະຫວ່າງບ້ານຖິ່ນຍຸງ ເມືອງວຽງຄຳ ຫາ ບ້ານແອກຊ້າງ ເມືອງໂພນໂຮງ ແຂວງວຽງຈັນ.

ຈາກນັ້ນ ເຈົ້າໜ້າທີ່ວິຊາສະເພາະ ໄດ້ສົມທົບກັບ ກອງບັນຊາການ ປກສ ເມືອງໂພນໂຮງ ແລະ ພາກສ່ວນກ່ຽວຂ້ອງ ລົງກວດກາ ແລະ ເກັບກຳຂໍ້ມູນຫຼັກຖານຢູ່ສະຖານທີ່ເກີດເຫດ ພົບວ່າມີຄວາມເສຍຫາຍປະກອບດ້ວຍ: ລັດຖະຄ້າຍຄືຄຳ 12 ບາດ 2 ສະຫຼຶງ, ເງິນໂດລາສະຫະລັດ 1.000 ໂດລາ ແລະ ເງິນກີບ 36.000.000 ກີບ.

ຈາກການສືບສວນ-ສອບສວນ ແລະ ຕິດຕາມເປົ້າໝາຍ, ເຈົ້າໜ້າທີ່ສາມາດກັກຕົວຜູ້ຖືກຫາໄດ້ 4 ຄົນ ຄື:

1. ທ້າວ ເຈັງວິໄລ ຖໍ ອາຍຸ 35 ປີ, ອາຊີບກຳມະກອນ, ຖິ່ນກຳເນີດແຂວງຫົວພັນ, ປັດຈຸບັນຢູ່ບ້ານພຸສັນ ເມືອງໂພນໂຮງ ແຂວງວຽງຈັນ.

2. ທ້າວ ປໍ່ທໍ່ ອາຍຸ 25 ປີ, ອາຊີບ ກຳມະກອນ, ຖິ່ນກຳເນີດແຂວງຫົວພັນ, ປັດຈຸບັນພັກເຊົ່າຢູ່ບ້ານຈຸ້ມ ເມືອງທຸລະຄົມ ແຂວງວຽງຈັນ.

3. ທ້າວ ໄຊ ມົ່ວ ອາຍຸ 23 ປີ, ອາຊີບກຳມະກອນ, ຖິ່ນກຳເນີດແຂວງຫົວພັນ, ປັດຈຸບັນພັກເຊົ່າຢູ່ບ້ານຖິ່ນຍຸງ ເມືອງວຽງຄຳ ແຂວງວຽງຈັນ.

4. ທ້າວ ນໍຈິ່ງໄຊລີ ທໍ່ ອາຍຸ 45 ປີ, ຖິ່ນກຳເນີດແຂວງຫົວພັນ, ປັດຈຸບັນຢູ່ບ້ານແສງສະຫວ່າງ ເມືອງແກ້ວອຸດົມ ແຂວງວຽງຈັນ.

ຜ່ານການສອບສວນ ທ້າວ ນໍຈິ່ງໄຊລີ ທໍ່ ໄດ້ໃຫ້ການຮັບສາລະພາບວ່າ: ຕົນເອງຮູ້ຈັກກັບຜູ້ເສຍຫາຍມາແຕ່ທ້າຍປີ 2023 ແລະ ຕິດຕໍ່ສື່ສານກັນຜ່ານທາງເຟດບຸກ; ຜູ້ເສຍຫາຍເຄີຍເດີນທາງມາທ່ອງທ່ຽວ ສປປ ລາວ ແລ້ວ 2 ຄັ້ງ. ຕໍ່ມາ ໃນວັນທີ 7 ກັນຍາ 2026 ຜູ້ເສຍຫາຍທັງ 2 ຄົນ ໄດ້ເດີນທາງເຂົ້າມາທ່ອງທ່ຽວອີກຄັ້ງ, ເຊິ່ງ ທ້າວ ນໍຈິ່ງໄຊລີ ທໍ່ ແລະ ທ້າວ ເຈັງວິໄລ ຖໍ ໄດ້ໄປຮັບຢູ່ສະໜາມບິນສາກົນວັດໄຕ ແລະ ພາໄປທ່ຽວຕາມສະຖານທີ່ຕ່າງໆ.

ມາຮອດວັນທີ 11 ຕຸລາ 2026, ທ້າວ ເຈັງວິໄລ ຖໍ ໄດ້ປຶກສາກັບ ທ້າວ ນໍຈິ່ງໄຊລີ ທໍ່ ຄິດຈະປຸ້ນເອົາຊັບສິນຂອງຜູ້ເສຍຫາຍ ແລະ ວາງແຜນຮ່ວມກັນກໍ່ເຫດປຸ້ນ ໂດຍມອບໃຫ້ ທ້າວ ເຈັງວິໄລ ຖໍ ເປັນຜູ້ຈັດຫາບຸກຄົນມາກໍ່ເຫດ.

ຫຼັງຈາກພາຜູ້ເສຍຫາຍໄປທ່ຽວເຂື່ອນນ້ຳງື່ມ ແລະ ແວ່ກິນເຂົ້າຢູ່ເຂດຕະຫຼາດບ້ານເກີນ ເມືອງທຸລະຄົມ ແລ້ວພວກກ່ຽວໄດ້ພາກັນຂ້າມບັກ ຈາກບ້ານເກີນໄປບ້ານວຽງຄຳ ແລະ ເດີນທາງຕໍ່ຕາມເສັ້ນທາງສວນກ້ວຍ ບ້ານຖິ່ນຍຸງ ຫາ ບ້ານແອກຊ້າງ ເມືອງໂພນໂຮງ. ເມື່ອຮອດຈຸດຂົວຮ່ອງນ້ຳແດງ ໄດ້ພົບລົດຂອງ ທ້າວ ເຈັງວິໄລ ຖໍ ຈອດຢູ່ ພ້ອມມີຄົນຮ້າຍ 2 ຄົນ ໃຊ້ອາວຸດມີດ ແລະ ປືນ ຂົ່ມຂູ່ເອົາຊັບສິນຈາກ ທ້າວ ເຈັງວິໄລ ຖໍ, ນາງ ຊົວວີ, ທ້າວ ນໍຈິ່ງໄຊລີ ທໍ່ ແລະ ນາງ ນໍ ມົ່ວຢ່າງ ແລ້ວຫຼົບໜີໄປ. ສ່ວນກຸ່ມຜູ້ກ່ຽວໄດ້ຂັບຂີ່ລົດຈັກກັບໄປພັກຢູ່ເຂດຫຼັກ 52.

ຮອດຕອນເຊົ້າວັນທີ 12 ຕຸລາ 2026, ທ້າວ ນໍຈິ່ງໄຊລີ ທໍ່ ແລະ ທ້າວ ເຈັງວິໄລ ຖໍ ໄດ້ພາກັນຫຼົບໜີ; ທ້າວ ນໍຈິ່ງໄຊລີ ທໍ່ ໄດ້ຍ່າງຈາກຫຼັກ 52 ໄປຫາສວນກ້ວຍບ່ອນທີ່ລູກສາວເຮັດວຽກ ຢູ່ບ້ານລິ່ງຊັນ ເມືອງທຸລະຄົມ ແຂວງວຽງຈັນ. ຈົນ ຮອດເວລາ 17:30 ໂມງ ຂອງວັນດຽວກັນ, ທ້າວ ເຈັງວິໄລ ຖໍ ໄດ້ເດີນທາງມາພົບຕາມນັດໝາຍຢູ່ບ້ານລິ່ງຊັນ ແລ້ວ

ຕໍ່ໜ້າ 3

ປກສ ແຂວງວຽງຈັນ ກັກຕົວຜູ້ຖືກຫາ 4 ຄົນ ຮ່ວມກັນປຸ້ນຊັບ ພ້... (ຕໍ່ຈາກໜ້າ 2)

ແບ່ງປັນຊັບສິນທີ່ໄດ້ຈາກການກໍ່ເຫດໃຫ້ ປະກອບມີ: ເງິນກີບ 10.000.000 ກີບ, ສາຍຄໍສີເຫຼືອງຄ້າຍຄືຄຳ 2 ເສັ້ນ ແລະ ສາຍແຂນສີເຫຼືອງຄ້າຍຄືຄຳ 1 ເສັ້ນ (ບໍ່ຮູ້ນ້ຳໜັກແນ່ນອນ) ກ່ອນຈະແຍກກັນ ໄປ.

ຈາກນັ້ນ, ທ້າວ ນໍຈົງໄຊລີ ທໍ່ ໄດ້ນຳ ວັດຖຸຄ້າຍຄືຄຳໄປຝັງໄວ້ບໍລິເວນສວນກ້ວຍ ບ້ານລິ່ງຊັນ ໃກ້ຖຽງ ແລະ ແຈ້ງໃຫ້ ລູກສາວຊື່ ນາງ ໄມວ່າງ ທໍ່ ຮັບຮູ້ ກ່ອນຈະ ຫຼົບໜີໄປຢູ່ບ້ານເມືອງເກົ່າ ເມືອງບໍລິຄັນ ແຂວງບໍລິຄຳໄຊ. ຕໍ່ມາໃນວັນທີ 7 ພະຈິກ 2026, ຜູ້ກ່ຽວຈຶ່ງໄດ້ເຂົ້າມາມອບຕົວຕໍ່ ເຈົ້າໜ້າທີ່.

ໃນວັນທີ 8 ພະຈິກ 2026, ເຈົ້າໜ້າທີ່ໄດ້ລົງເກັບກູ້ເຄື່ອງຂອງກາງຄະດີ ທີ່ທ້າວ ນໍຈົງໄຊລີ ທໍ່ ໄດ້ຈາກການກໍ່ເຫດ ມາຮັກສາໄວ້ ປະກອບມີ: ເງິນກີບ 10.000.000 ກີບ, ສາຍຄໍຄ້າຍຄືຄຳ 2 ເສັ້ນ ພ້ອມຈີ້ພະ 1 ອັນ, ສາຍແຂນຄ້າຍຄື ຄຳ 1 ເສັ້ນ, ຕຸ້ມຫູຄ້າຍຄືຄຳ 3 ຄູ່ ກັບ 1 ຂ້າງ, ເຂັມຂັດຄ້າຍຄືຄຳ 1 ອັນ, ຈີ້ສາຍຄໍສີ ຂາວຄ້າຍຄືເງິນ 2 ອັນ, ສາຍຄໍສີຂາວຄ້າຍ ຄືເງິນ 1 ເສັ້ນ ແລະ ຕຸ້ມຫູສີຂາວຄ້າຍຄື ເງິນ 2 ຄູ່ ກັບ 1 ຂ້າງ ມາເກັບຮັກສາໄວ້ຢູ່ ກອງບັນຊາການ ປກສ ແຂວງວຽງຈັນ ເພື່ອດຳເນີນການສົ່ງຄືນໃຫ້ເຈົ້າຂອງເດີມ ຕາມລະບຽບກົດໝາຍ.

ສ່ວນຄະດີດັ່ງກ່າວເຈົ້າໜ້າທີ່ພວມ ສືບຕໍ່ຂະຫຍາຍຜົນດຳເນີນຄະດີຕາມຂັ້ນ ຕອນ.

ຂໍ້ມູນ: ປກສ ແຂວງວຽງຈັນ

◆ **ຂ່າວພາຍໃນ** · 10:18 ໂມງ · ອ່ານ 12 ຄັ້ງ

ນາຍົກລັດຖະມົນຕີ ຢ້ຽມຢາມໂຄງການພະລັງງານໝູນວຽນ ໂພນສະອາດ ຢູ່ເມືອງໂຂງ



ໃນໂອກາດເດີນທາງມາເຂົ້າຮ່ວມບຸນມະໂຫລານ ກາເຟ ແລະ ຜະລິດຕະພັນກະສິກຳລາວ ພູພຽງບໍລະເວນ 2026 ທີ່ແຂວງຈຳປາສັກ ໃນວັນທີ 25 ພະຈິກ 2026, ທ່ານ ສະເຫລີມໄຊ ກົມມະສິດ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ພ້ອມຄະນະ ໄດ້ຢ້ຽມຢາມໂຄງການພະລັງງານ ໝູນວຽນ ໂພນສະອາດ ຢູ່ບ້ານໂພນສະອາດ ເມືອງໂຂງ ແຂວງຈຳປາສັກ ໂດຍການຕ້ອນຮັບຂອງ ທ່ານ ສາທິດ ປັດ ສາພັນ ເລຂາຄະນະບໍລິຫານງານພັກເມືອງ ພ້ອມດ້ວຍຄະນະ ປະຈຳພັກເມືອງ, ກຳມະການພັກເມືອງ ແລະ ພາກສ່ວນ ກ່ຽວຂ້ອງ.

ໂຄງການກໍ່ສ້າງພະລັງງານໝູນວຽນ ໂພນສະອາດ ມີ ກຳລັງຕິດຕັ້ງ 150 ເມກາວັດ, ເນື້ອທີ່ທັງໝົດ 229,13 ເຮັກຕາ ແລະ ມູນຄ່າການລົງທຶນປະມານ 164,41 ລ້ານ ໂດລາສະຫະລັດ. ປັດຈຸບັນ ຄວາມຄືບໜ້າ ໂດຍລວມບັນລຸໄດ້ 89% ແລະ ພວມ ເລັ່ງປະຕິບັດວຽກທີ່ຍັງເຫລືອໃຫ້ສຳເລັດ ຕາມແຜນ. ອີງຕາມບົດລາຍງານຄວາມຄືບ ໜ້າປະຈຳເດືອນຕຸລາ 2026, ໂຄງການ ສາມາດຜະລິດໄຟຟ້າໄດ້ສະເລ່ຍ 301,56 ຈິກາວັດໂມງຕໍ່ປີ ເພື່ອສົ່ງຜ່ານລະບົບສາຍ ສົ່ງ 230 ກິໂລໂວນ ຄວາມຍາວ 25 ກິໂລແມັດ ເຊື່ອມຕໍ່ເຂົ້າສະຖານີບ້ານຫາດ ສົ່ງອອກໄປປະເທດກຳປູເຈຍ. ສຳລັບ ຄວາມຄືບໜ້າວຽກຫລັກປະກອບມີ: ຕິດ ຕັ້ງເສົາເຂັມປະຕິບັດໄດ້ 98% (ແຜນ 89.850 ຕົ້ນ), ຕິດຕັ້ງໂຄງເຫລັກຮັບ ແຜງໂຊລ່າປະຕິບັດໄດ້ 95,4% (8.985 ໂຕະ), ຕິດຕັ້ງແຜງໂຊລາເຊວ ປະຕິບັດໄດ້ 84,86% (ຈາກແຜນ 70%), ຕິດຕັ້ງ ໝໍ້ແປງ MV 3,3 MVA (46 ຈຸດ) ແລະ ກໍ່ສ້າງຖານ Battery (22 ຈຸດ) ສຳເລັດ 100%. ກໍ່ສ້າງທາງພາຍໃນ ໂຄງການ (14 ກມ) ປະຕິບັດໄດ້ 90%.

ນອກຈາກວຽກເຕັກນິກ ແລະ ການກໍ່ສ້າງ, ໂຄງການຍັງໄດ້ຊົດເຊີຍຜົນ ກະທົບດ້ານທີ່ດິນທຳການຜະລິດ ໃຫ້ ປະຊາຊົນຜູ້ຖືກຜົນກະທົບ 45 ຄອບຄົວ (35 ຕອນດິນ) ລວມເປັນເງິນ 591 ລ້ານກວ່າກີບ. ພ້ອມກັນນີ້, ໄດ້ເອົາໃຈໃສ່ ດ້ານຄວາມປອດໄພ ແລະ ສຸຂະພາບຂອງ ແຮງງານທັງໝົດ 624 ຄົນ ໂດຍບໍ່ມີ ລາຍງານອຸບັດເຫດເກີດຂຶ້ນໃນເດືອນຜ່ານ ມາ. ພ້ອມນີ້, ໂຄງການມີແຜນສຳເລັດການ ກໍ່ສ້າງ ແລະ ກ້າວສູ່ການເປີດດຳເນີນງານ ເຊີງພານິດຕາມກຳນົດໃນໄລຍະທ້າຍປີ 2026 ນີ້.

ຂ່າວ-ພາບ: ພຸດທະສິນ ວົງວິໄລ ທອງ

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

◆ **ຂ່າວພາຍໃນ** · 09:38 ໂມງ · ອ່ານ 10 ຄັ້ງ

ນາຍົກລັດຖະມົນຕີ ເຂົ້າຮ່ວມ ເປີດມະຫາກຳກາເຟລາວ ແລະ ຜະລິດຕະພັນກະສິກຳ ທີ່ຈຳປາສັກ



ພິທີເປີດມະຫາກຳກາເຟລາວ ແລະ ຜະລິດຕະພັນກະສິກຳ ຈັດຂຶ້ນໃນວັນທີ 25 ພະຈິກ 2026 ທີ່ແຂວງຈຳປາສັກ ໂດຍໃຫ້ກຽດເຂົ້າຮ່ວມຂອງທ່ານ ສະເຫລີມໄຊ ກົມມະສິດ ນາຍົກລັດຖະມົນຕີ ພ້ອມດ້ວຍພັນລະຍາ, ມີບັນດາ ລັດຖະມົນຕີ, ການນຳແຂວງຈຳປາສັກ, ຜູ້ຕາງໜ້າອົງການຈັດຕັ້ງສາກົນປະຈຳລາວ, ຜູ້ປະກອບການ ແລະ ແຂກຖືກເຊີນ ເຂົ້າຮ່ວມ.

ການຈັດງານຄັ້ງນີ້ ກໍເພື່ອສົ່ງເສີມກາເຟລາວ ໃຫ້ເປັນທີ່ຮູ້ຈັກກວ້າງຂວາງຫລາຍຂຶ້ນໃນຕະຫລາດສາກົນ ຂອງກຸ່ມທຸລະກິດຂະໜາດນ້ອຍ-ກາງ ແລະ ຫົວໜ່ວຍການຜະລິດຕ່າງໆ, ທັງເປັນການກະຕຸ້ນການທ່ອງທ່ຽວລາວ ກໍຄືແຂວງຈຳປາສັກ ໂດຍສະເພາະ ຢູ່ເຂດພູພຽງບໍລະເວນ ທີ່ມີຄວາມສວຍງາມ, ອຸດົມສົມບູນ, ເປັນແຫລ່ງປູກກາເຟ ທີ່ມີລົດຊາດ-ກິ່ນຫອມ ແບບເອກະລັກສະເພາະ ແລະ ມີຊື່ສຽງຂອງປະເທດ, ທັງເປັນການຊ່ວຍວາງພື້ນຖານອັນ ໜັກແໜ້ນ ໃຫ້ກາເຟລາວ ສາມາດກ້າວ ເຂົ້າເປັນສະມາຊິກຂອງອົງການກາເຟ ສາກົນ (ICO) ໃນອະນາຄົດ.

ພ້ອມກັນນັ້ນ, ຍັງເປັນການສ້າງ ໂອກາດ ແລະ ເງື່ອນໄຂອັນດີ ໃນການນຳ ສະເໜີລົດຊາດທີ່ເປັນເອກະລັກ ແລະ ຄຸນນະພາບຂອງກາເຟລາວ, ເປັນເວທີ ແລກປ່ຽນຄວາມຮູ້, ບົດຮຽນ-ປະສົບການ ຕະຫລອດຮອດການພົວພັນເຊື່ອມຕໍ່ ລະຫວ່າງ ຊາວສວນກາເຟ ກັບຄູ່ຮ່ວມ ທຸລະກິດ ແລະ ຄູ່ຮ່ວມງານສາກົນ, ສັງຄົມ ໄດ້ຮັບຮູ້ຕ່ອງໂສ້ການຜະລິດ ແລະ ຈຳໜ່າຍກາເຟ ກໍຄືການພົວພັນຂອງບັນດາ ຊາວສວນ, ຜູ້ຜະລິດ, ຜູ້ປະກອບການ, ຜູ້ ຂົ້ວກາເຟ, ຜູ້ປຸງແຕ່ງ ແລະ ທຸກພາກສ່ວນ ທີ່ມີສ່ວນຮ່ວມ ໃນການຜະລິດ, ຈຳໜ່າຍ, ຊົມໃຊ້ ແລະ ດື່ມກາເຟ, ເຮັດໃຫ້ ອຸດສາຫະກຳກາເຟລາວ ເຕີບໃຫຍ່ ຂະຫຍາຍຕົວ ທັງຕະຫລາດພາຍໃນ ແລະ ຕ່າງປະເທດ.

ຕິດພັນກັບການເຄື່ອນໄຫວເປີດ ມະຫາກຳກາເຟລາວ ແລະ ຜະລິດຕະພັນ ກະສິກຳ ຢູ່ແຂວງຈຳປາສັກ ຄັ້ງນີ້, ທ່ານ ນາຍົກລັດຖະມົນຕີ ພ້ອມດ້ວຍຄະນະ ຍັງ ໄດ້ເດີນທາງໄປຢ້ຽມຢາມໂຄງການປູກ ໝາກບລູເບີຣີ ຢູ່ເມືອງປາກຊ່ອງ ແລະ ໂຄງການພະລັງງານໄຟຟ້າແສງຕາເວັນ ຢູ່ເມືອງໂຂງ ຕື່ມອີກ.

ຂ່າວ-ພາບ: ກົມປະຊາສຳພັນ ຫສນຍ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 15:50 ໂມງ · ອ່ານ 9 ຄັ້ງ

ລາວ-ໄທ ສຳເລັດ ກອງປະຊຸມລະດັບວິຊາການ ດ້ານການຮ່ວມມືການຈ້າງງານ



ກອງປະຊຸມລະດັບວິຊາການດ້ານການຮ່ວມມື ການຈ້າງງານ ລາວ-ໄທ ລະຫວ່າງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຂອງ ສປປ ລາວ ແລະ ກະຊວງແຮງງານ ແຫ່ງລາຊະອານາຈັກໄທ ໄດ້ປິດລົງດ້ວຍຜົນສຳເລັດ ໃນວັນທີ 26 ພະຈິກ 2026 ທີ່ນະຄອນຫລວງວຽງຈັນ, ໂດຍທັງສອງຝ່າຍ ໄດ້ຮ່ວມກັນທົບທວນ, ແລກປ່ຽນຄຳເຫັນ ແລະ ປຶກສາຫາລືຫລາຍບັນຫາສຳຄັນ ເພື່ອຊຸກຍູ້ການຜັນຂະຫຍາຍຂໍ້ຕົກລົງຮ່ວມມືດ້ານການຈ້າງງານໃຫ້ເກີດປະສິດທິຜົນຫລາຍຂຶ້ນ ຊຶ່ງໃນໂອກາດປິດກອງປະຊຸມ ທ່ານ ນາງ ອານຸສອນ ຄຳສິງສະຫວັດ ຫົວໜ້າກົມການຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຂອງ ສປປ ລາວ ແລະ ທ່ານ ສາມາດ ພັດຕະມະສຸຄົນ ຫົວໜ້າກົມການຈັດຫາງານ ກະຊວງແຮງງານ ແຫ່ງລາຊະອານາຈັກໄທ ໄດ້ຮ່ວມກັນລົງນາມໃນບົດບັນທຶກຜົນສຳເລັດຂອງກອງປະຊຸມດັ່ງກ່າວ ໂດຍມີພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍ ລາວ-ໄທ ເຂົ້າຮ່ວມ ເປັນສັກຂີພິຍານ.

ໂອກາດນີ້, ທ່ານ ນາງ ອານຸສອນ ຄຳສິງສະຫວັດ ກ່າວວ່າ: ກອງປະຊຸມວິຊາການຄັ້ງນີ້ ບັນດາບັນຫາທີ່ທັງສອງຝ່າຍນຳມາປຶກສາຫາລືມີຄວາມຊັດເຈນ ແລະ ເລິກເຊິ່ງ ເຮັດໃຫ້ສາມາດກຳນົດທິດທາງການຜັນຂະຫຍາຍຂໍ້ຕົກລົງວ່າດ້ວຍການຮ່ວມມືດ້ານການຈ້າງງານ ລາວ-ໄທ ໃຫ້ເປັນຮູບປະທຳ ພ້ອມທັງຊ່ວຍແກ້ໄຂ ແລະ ຫລຸດຜ່ອນບັນຫາຕ່າງໆທີ່ເກີດຂຶ້ນໃນໄລຍະຜ່ານມາ. ສ່ວນບາງປະເດັນທີ່ຍັງບໍ່ທັນສາມາດບັນລຸຄວາມເຫັນເອກະພາບໄດ້ ຝ່າຍໄທຈະນຳໄປປະສານງານ ແລະ ປຶກສາຫາລືກັບພາກສ່ວນກ່ຽວຂ້ອງຂອງຕົນຕໍ່ໄປ ເພື່ອຊຸກຍູ້ໃຫ້ການຮ່ວມມືດ້ານແຮງງານຂອງສອງປະເທດມີຄວາມຄືບໜ້າ ແລະ ມີປະສິດທິຜົນຍິ່ງຂຶ້ນ.

ໃນຂະນະທີ່, ທ່ານ ສາມາດ ພັດຕະມະສຸຄົນ ກ່າວວ່າ: ການປະຊຸມຄັ້ງນີ້ ເປັນໂອກາດອັນດີທີ່ທັງສອງຝ່າຍໄດ້ແລກປ່ຽນຄຳເຫັນ ແລະ ປຶກສາຫາລືຮ່ວມກັນໃນຫລາຍບັນຫາສຳຄັນ ດ້ານການບໍລິຫານຈັດການແຮງງານ ຊຶ່ງຈະເປັນປະໂຫຍດຕໍ່ການພັດທະນາ ແລະ ເສີມສ້າງການຮ່ວມມືດ້ານແຮງງານ ລະຫວ່າງສອງປະເທດໃຫ້ມີປະສິດທິພາບຫລາຍຂຶ້ນ. ພ້ອມຢືນຢັນວ່າ: ຝ່າຍໄທຈະນຳເອົາຜົນການປຶກສາຫາລື ແລະ ຄຳເຫັນທີ່ໄດ້ຮັບໄປປະສານກັບໜ່ວຍງານທີ່ກ່ຽວຂ້ອງ ເພື່ອພິຈາລະນາດຳເນີນການຕາມຂັ້ນຕອນທີ່ເໝາະສົມ ແລະ ສືບຕໍ່ສານຕໍ່ຄວາມຮ່ວມມືກັບຝ່າຍລາວຢ່າງໃກ້ຊິດ.

ກອງປະຊຸມດັ່ງກ່າວ, ເປັນບາດກ້າວສຳຄັນໃນການສົ່ງເສີມສາຍພົວພັນ ແລະ ຄວາມຮ່ວມມືດ້ານແຮງງານ ລະຫວ່າງ ສປປ ລາວ ແລະ ລາຊະອານາຈັກໄທ ໃຫ້ແໜ້ນແຟ້ນຍິ່ງຂຶ້ນ.

ຂ່າວ-ພາບ: ທະນູທອງ

ຂ່າວພາຍໃນ · 09:46 ໂມງ · ອ່ານ 7 ຄັ້ງ

ລົງຊຸກຍູ້ການແກ້ໄຂຜົນກະທົບທາງລົດໄຟ ລາວ-ຈີນ ຢູ່ແຂວງອຸດົມໄຊ: ເຜີຍຍັງຄ້າງແກ້ໄຂບັນຫາສິ່ງແວດລ້ອມ 41 ກໍລະນີ ແລະ ຄ່າຊົດເຊີຍບາງສ່ວນ



ໃນລະຫວ່າງເດືອນພະຈິກ 2026 ນີ້, ຄະນະໜ່ວຍງານກວດກາຈາກອົງການກວດກາແຫ່ງລັດ ແລະ ກົມທາງລົດໄຟ ນຳໂດຍ ທ່ານ ພອນແກ້ວ ສີຫອມວົງ ຮອງຫົວໜ້າກົມກວດກາລັດ ອົງການກວດກາແຫ່ງລັດ ໄດ້ລົງຕິດຕາມ, ກວດກາ ແລະ ຊຸກຍູ້ການແກ້ໄຂຜົນກະທົບທີ່ຍັງຄ້າງຈາກໂຄງການທາງລົດໄຟ ລາວ-ຈີນ ຢູ່ຫ້ອງປະຊຸມສະຖານີຂົນສົ່ງໂດຍສານເມືອງໄຊ ແຂວງອຸດົມໄຊ ໂດຍມີບັນດາພະແນກການທີ່ກ່ຽວຂ້ອງ, ເຈົ້າໜ້າທີ່ ປກຊ-ປກສ ແລະ ພາສີປະຈຳສະຖານີເຂົ້າຮ່ວມ.

ສະຫຼຸບຄວາມຄືບໜ້າການຊົດເຊີຍ ແລະ ບັນຫາທີ່ຍັງຄ້າງ

ໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ຜ່ານເຂດ ແຂວງອຸດົມໄຊ ມີຄວາມຍາວທັງໝົດ 123.60 ກິໂລແມັດ ກວມເອົາເນື້ອທີ່ດິນ 812.30 ເຮັກຕາ ໃນ 44 ບ້ານ, ມີຜູ້ຖືກຜົນກະທົບທັງໝົດ 1,685 ຄອບຄົວ (3,047 ຕອນດິນ) ເຊິ່ງມີລາຍລະອຽດການດຳເນີນງານດັ່ງນີ້:

ດ້ານງົບປະມານຄ່າຊົດເຊີຍ: ແຂວງໄດ້ຮັບງົບປະມານທັງໝົດ 253,579,701,863 ກີບ (ບ້ວງລັດຖະບານ 229.98 ຕື້ກວ່າກີບ ແລະ ບ້ວງບໍລິສັດທາງລົດໄຟ 23.59 ຕື້ກວ່າກີບ). ປັດຈຸບັນ ໄດ້ເບີກຈ່າຍໃຫ້ຜູ້ຖືກຜົນກະທົບແລ້ວ 1,684 ຄອບຄົວ ເປັນເງິນ 230,451,050,271 ກີບ (ຍັງເຫຼືອ 1 ຄອບຄົວ ມູນຄ່າ 86,665,000 ກີບ ທີ່ຍັງບໍ່ທັນມາຮັບເອົາ). ສ່ວນເງິນທີ່ຍັງເຫຼືອອີກ 23.12 ຕື້ກວ່າກີບ ແມ່ນຍ້ອນການໄກ່ເກ່ຍຊົດເຊີຍເນື້ອທີ່ດິນຢູ່ສະຖານີເມືອງນາໝໍ້ ແລະ ເມືອງງາ ຍັງບໍ່ທັນສຳເລັດຕາມການອອກແບບ.

ບັນຫາສິ່ງແວດລ້ອມ ແລະ ສັງຄົມ: ຍັງມີບັນຫາທີ່ບໍ່ທັນໄດ້ຮັບການແກ້ໄຂທັງໝົດ 41 ກໍລະນີ ເປັນຕົ້ນແມ່ນເສັ້ນທາງລົດໄຟຕັດຜ່ານທາງເຂົ້າເຂດທຳການຜະລິດຂອງປະຊາຊົນ, ການນຳຫີນມາຖົມໃສ່ດິນປະຊາຊົນ 30 ກໍລະນີ, ບັນຫານ້ຳຖ້ວມຂັງທາງລອດທາງລົດໄຟຢູ່ເມືອງໄຊ ແລະ ດິນເສາະເຈື່ອນໃນລະດູຝົນ ທີ່ເຮັດໃຫ້ການສັນຈອນໄປ-ມາພົບຄວາມຫຍຸ້ງຍາກ.

ການບຸກລຸກເຂດສະຫງວນ: ກວດພົບປະຊາຊົນຈຳນວນໜຶ່ງໄດ້ເຂົ້າໄປທຳການຜະລິດຢູ່ຂອບເຂດເທິງອຸມົງ, ແຄມທາງອຸມົງ, ຕັ້ງຫຼຸບ ແລະ ລ້ຽງສັດຕາມແລວທາງລົດໄຟ ເຊິ່ງມີຄວາມສ່ຽງຕໍ່ຄວາມປອດໄພ.

ທິດທາງການແກ້ໄຂ ແລະ ມາດຕະການເຂັ້ມງວດ

ໃນຕອນທ້າຍກອງປະຊຸມ, ທ່ານ ພອນແກ້ວ ສີຫອມວົງ ໄດ້ເນັ້ນໜັກໃຫ້ທຸກພາກສ່ວນເອົາໃຈໃສ່ຈັດຕັ້ງປະຕິບັດ 4 ວຽກງານສຳຄັນ ຄື:

ຮັກສາຄວາມປອດໄພ ແລະ ສະກັດກັ້ນການລັກຂະໂມຍ: ໃຫ້ກົມທາງ

ຕໍ່ໜ້າ 6

ລົງຊຸກຍູ້ການແກ້ໄຂຜົນກະທົບທາງລົດໄຟ ລາວ-ຈີນ ຢູ່ແຂວງອຸດົ... (ຕໍ່ຈາກໜ້າ 5)

ລົດໄຟ ປະສານສົມທົບກັບກຳລັງ ປກຊ-ປກສ ເພີ່ມທະວີການກວດກາບໍລິເວນສະຖານີຢ່າງເຂັ້ມງວດ ແລະ ສະກັດກັ້ນບໍ່ໃຫ້ມີການລັກລອບຕັດ ຫຼື ຮັບຊື້ສາຍໄຟ ແລະ ອຸປະກອນຂອງທາງລົດໄຟ ລາວ-ຈີນ.

ປັກຫຼັກແດນໃຫ້ຈະແຈ້ງ: ໃຫ້ພະແນກການທີ່ກ່ຽວຂ້ອງລົງສຳຫຼວດພື້ນທີ່ຕົວຈິງຄືນໃໝ່ ແລະ ເຮັດບົດບັນທຶກຮ່ວມກັນໃນການປັກຫຼັກແດນເຂດແລວທາງສະໜອງໃຫ້ຊັດເຈນ.

ໂຄສະນາລະບຽບການ: ເພີ່ມທະວີການເຜີຍແຜ່ລະບຽບການກ່ຽວກັບວຽກງານທາງລົດໄຟ ໃຫ້ປະຊາຊົນຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ ເພື່ອຫຼຸດຜ່ອນການບຸກລຸກແລວທາງ.

ສ້າງກົນໄກປະສານງານ: ໃຫ້ບໍລິສັດທາງລົດໄຟ ລາວ-ຈີນ ແຕ່ງຕັ້ງພະນັກງານປະສານງານສະເພາະ ເພື່ອຮ່ວມມື ແລະ ສະໜອງຂໍ້ມູນການຂົນສົ່ງຜູ້ໂດຍສານ-ສິນຄ້າເຂົ້າ-ອອກ ໃຫ້ແກ່ພາກສ່ວນຢ່າງເປັນປົກກະຕິ.

ແຫຼ່ງຂ່າວ: ລາຍງານໂດຍ ສີແພງ ດາລາສະຫວັນ / ອົງການກວດກາແຫ່ງລັດ

ເສດຖະກິດ-ສັງຄົມ

◆ ເສດຖະກິດ-ສັງຄົມ · 16:22 ໂມງ · ອ່ານ 7 ຄັ້ງ

ອັດຕະປື ຕັ້ງເປົ້າຮອດ 2030 ຈະສ້າງຄອບຄົວພົ້ນທຸກໃຫ້ໄດ້ຫລາຍກ່ວາ 405 ຄອບຄົວ



ແຫລ່ງຂ່າວຈາກ ແຂວງອັດຕະປື ໃຫ້ຮູ້ວ່າ: ຄະນະກຳມະການປົກຄອງແຂວງອັດຕະປື ຈະສູ້ຊົນສ້າງຄອບຄົວພົ້ນທຸກໃຫ້ໄດ້ຫລາຍກວ່າ 405 ຄອບຄົວ ແຕ່ນີ້ຮອດປີ 2030 ຈາກຈຳນວນຄອບຄົວທຸກຍາກທີ່ຍັງເຫລືອ 4.077 ຄອບຄົວ ໃຫ້ຫລຸດລົງເຫລືອ 3.672 ຄອບຄົວ ຫລື ປະມານ 10,52%, ສ້າງບ້ານພົ້ນທຸກໃຫ້ໄດ້ຫລາຍກວ່າ 9 ບ້ານ ຈາກຈຳນວນບ້ານທຸກຍາກທີ່ຍັງເຫລືອ 14 ບ້ານ ແລະ ສ້າງເມືອງພົ້ນທຸກໃຫ້ໄດ້ 2 ເມືອງ ຈາກຈຳນວນເມືອງທຸກຍາກທີ່ຍັງເຫລືອ 2 ເມືອງ.

ທ່ານ ສີໄລ ສີສະແຫວງສຸກ ຮອງປະທານຄະນະກຳມະການປົກຄອງແຂວງອັດຕະປື ໄດ້ລາຍງານແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໄລຍະປີ 2027-2030 ຂອງແຂວງອັດຕະປື ໃນວັນທີ 25 ພະຈິກ 2026 ໃນອາລະດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນ ແຂວງອັດຕະປື ຊຸດທີ V ວ່າ: ເພື່ອຜັນຂະຫຍາຍມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງວາລະແຫ່ງຊາດ ກ່ຽວກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ບັນລຸຕາມຄາດໝາຍ ແລະ ເກີດຜົນເປັນຈິງ, ຄະນະຮັບຜິດຊອບຊີ້ນຳການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ແຂວງອັດຕະປື ໄດ້ຄົ້ນຄວ້າສ້າງແຜນປະຕິບັດງານ ໂດຍກຳນົດທິດທາງ, ຈຸດປະສົງ, ແຜນງານ, ໂຄງການ, ກິດຈະກຳ ແລະ ມາດຕະການຕ່າງໆ ເພື່ອເປັນບ່ອນອີງສຳຄັນໃນການຂັບເຄື່ອນວຽກງານດັ່ງກ່າວໃຫ້ມີປະສິດທິຜົນ.

ສຳລັບທິດທາງລວມ ແມ່ນການຫັນເອົາຍຸດທະສາດການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໄປສູ່ການປະຕິບັດຕົວຈິງ, ໂດຍມີເປົ້າໝາຍຈະແຈ້ງ ເພື່ອສ້າງຄວາມປ່ຽນແປງໃຫ້ເຫັນຜົນຢ່າງເປັນຮູບປະທຳ ແລະ ແກ້ໄຂຄວາມທຸກຍາກຢ່າງຍືນຍົງພາຍໃນປີ 2030. ພ້ອມນີ້, ຈະສຸມໃສ່ສ້າງບ້ານຈຸດສຸມຕົວແບບດ້ານການແກ້ໄຂຄວາມທຸກຍາກ 5 ບ້ານ ໂດຍເນັ້ນການສ້າງອາຊີບ ແລະ ແຫລ່ງລາຍຮັບທີ່ໝັ້ນຄົງໃຫ້ປະຊາຊົນ, ຄຽງຄູ່ກັບການຍົກລະດັບການເຂົ້າເຖິງລະບົບປົກປ້ອງສັງຄົມຂັ້ນພື້ນຖານ, ພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກໃນເຂດຊົນນະບົດ ໃຫ້ສາມາດຮອງຮັບການດຳລົງຊີວິດ, ການຜະລິດ ແລະ ການເຂົ້າເຖິງບໍລິການສາທາລະນູປະໂພກຢ່າງທົ່ວເຖິງ ແລະ ຍືນຍົງ.

ນອກຈາກນີ້, ຍັງຈະຈັດສັນພຸມລຳເນົາ ແລະ ສ້າງອາຊີບທີ່ໝັ້ນຄົງໃຫ້ປະຊາຊົນບັນດາເຜົ່າ ເພື່ອຫລຸດຜ່ອນການເຄື່ອນຍ້າຍຖິ່ນຖານແບບຊະຊາຍ, ສ້າງ ແລະ ປັບປຸງລະບົບການເມືອງຂັ້ນຮາກຖານໃຫ້ໜັກແໜ້ນເຂັ້ມແຂງ ສາມາດນຳພາປະຊາຊົນເປັນເຈົ້າການໃນການພັດທະນາຕົນເອງ ແລະ ຊຸມຊົນ, ພ້ອມທັງສ້າງຮາກຖານໃຫ້ມີຄວາມສະຫງົບ, ປອດໄພ ແລະ ເປັນລະບຽບຮຽບຮ້ອຍ.

ພ້ອມກັນນັ້ນ, ແຂວງຈະຂົນຂວາຍ ແລະ ດຶງດູດແຫລ່ງທຶນຈາກພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນພັດທະນາຊົນນະບົດ ເພື່ອເພີ່ມທຶນຮອນ ແລະ ຂະຫຍາຍຂອບເຂດການພັດທະນາ ໂດຍບໍ່ອາໄສພຽງແຕ່ງົບປະມານຂອງລັດ ພ້ອມທັງສ້າງ ແລະ ປັບປຸງນິຕິກຳ ແລະ ກົນໄກການຈັດຕັ້ງປະຕິບັດ ໃຫ້ມີຄວາມຄົບຊຸດ, ເຂັ້ມງວດ, ສອດຄ່ອງ ແລະ ເອື້ອອຳນວຍຕໍ່ການຂັບເຄື່ອນວຽກງານໃຫ້ມີປະສິດທິພາບ. ທັງໝົດນີ້ ແມ່ນທິດທາງ ແລະ ແຜນຈຸດສຸມສຳຄັນຂອງແຂວງອັດຕະປື ໃນການຂັບເຄື່ອນວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໄລຍະປີ 2027-2030 ຂອງແຂວງອັດຕະປື ເພື່ອສ້າງຄວາມປ່ຽນແປງໃນເຂດຊົນນະບົດ, ຍົກສູງຄຸນນະພາບຊີວິດປະຊາຊົນ ແລະ ນຳໄປສູ່ການຫລຸດຜ່ອນຄວາມທຸກຍາກຢ່າງຍືນຍົງພາຍໃນປີ 2030.

ຂ່າວ: ພອນປະເສີດ

ໂຄສະນາ
ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

◆ ເຫດການ · 10:26 ໂມງ · ອ່ານ 16 ຄັ້ງ

ຮ່ວມມືສະກັດຈັບ 2 ຜູ້ຕ້ອງຫາ ພ້ອມຢາບ້າ 600,000 ເມັດ ຄາລົດກະບະຢູ່ ເສັ້ນທາງອຸດົມໄຊ-ຫຼວງພະບາງ!



ເຈົ້າໜ້າທີ່ຕຳຫຼວດລາວ ແລະ ຫວຽດນາມ ປະສານກຳລັງລົງພື້ນທີ່ສະກັດ ຈັບຂະບວນການຄ້າຢາເສບຕິດຂ້າມຊາດ ລາຍໃຫຍ່ ສາມາດກັກຕົວຜູ້ຕ້ອງຫາໄດ້ 2 ຄົນ ພ້ອມຂອງກາງຢາບ້າຈຳນວນ 600,000 ເມັດ ໃນຂະນະກຳລັງລັກ ລອບຂົນສົ່ງຜ່ານເສັ້ນທາງແຂວງອຸດົມໄຊ ມຸ່ງໜ້າສູ່ແຂວງຫຼວງພະບາງ.

ເບື້ອງຫຼັງການປະຕິບັດການ

ເຫດການດັ່ງກ່າວເກີດຂຶ້ນໃນເວລາ ປະມານ 15:50 ໂມງ ຂອງວັນທີ 20 ພະຈິກ 2026 ໂດຍໜ່ວຍງານປະຕິບັດ ງານຮ່ວມ ທີ່ປະກອບດ້ວຍ ກອງ ບັນຊາການ ປກສ ແຂວງຫຼວງພະບາງ, ປກສ ເມືອງນ້ຳບາກ ຮ່ວມກັບ ໜ່ວຍງານ ປະສານງານກົມຕຳຫຼວດສືບສວນ-ສອບ ສວນຄະດີຢາເສບຕິດ ປະຈຳ ສປປ ລາວ ແລະ ກອງບັນຊາການຕຳຫຼວດແຂວງດຽນ ບຽນ ແຫ່ງ ສສ ຫວຽດນາມ ໄດ້ລົງຕັ້ງດ່ານ ກວດກາ ແລະ ລາດຕະເວນຕາມເສັ້ນທາງ ຫຼວງສາຍອຸດົມໄຊ-ຫຼວງພະບາງ.

ກວດຄົ້ນພົບຢາບ້າ 100 ມັດ ຊຸກ ເຊື່ອງຢ່າງແນບນຽນ

ລະຫວ່າງການປະຕິບັດໜ້າທີ່ ເຈົ້າໜ້າທີ່ໄດ້ພົບເຫັນລົດກະບະຍີ່ຫໍ້ Toyota Hilux ປ້າຍທະບຽນ ນະຄອນຫຼວງວຽງຈັນ ຂັບຂີ່ຜ່ານມາດ້ວຍ ທ່າທາງມີພິລຸດ ຈຶ່ງໄດ້ສົ່ງສັນຍານໃຫ້ຢຸດ ເພື່ອກວດຄົ້ນ. ຜ່ານການກວດກາຢ່າງ ລະອຽດ ພົບຂອງກາງເປັນ ຢາບ້າຈຳນວນ 100 ມັດ ຫຼື ເທົ່າກັບ 600,000 ເມັດ ທີ່ຖືກຊຸກເຊື່ອງໄວ້ຕາມຈຸດຕ່າງໆຂອງລົດ ດ້ວຍວິທີການທີ່ແນບນຽນ ພ້ອມດ້ວຍ ໂທລະສັບມືຖື 2 ໜ່ວຍ.

ດຳເນີນຄະດີ ແລະ ຂະຫຍາຍຜົນ

ຈາກການສອບສວນເບື້ອງຕົ້ນ ຜູ້ ຕ້ອງຫາທັງ 2 ຄົນ ຊື່ ທ້າວ ວີ ທໍ່ (ອາຍຸ 32 ປີ) ແລະ ທ້າວ ວີງ ວ່າ (ອາຍຸ 26 ປີ) ທັງສອງມີພູມລຳເນົາຢູ່ບ້ານໂພນສະຫວ່າງ ເມືອງນ້ຳບາກ ແຂວງຫຼວງພະບາງ. ປັດຈຸບັນ ເຈົ້າໜ້າທີ່ກ່ຽວຂ້ອງຂອງທັງສອງ ປະເທດ ກຳລັງຮ່ວມມືກັນສືບສວນ-ສອບ ສວນຂະຫຍາຍຜົນ ເພື່ອຕິດຕາມຫາຜູ້ ຮ່ວມຂະບວນການທີ່ເຫຼືອມາດຳເນີນຄະດີ ຕາມລະບຽບກົດໝາຍ.

ທີ່ມາ: ໜັງສືພິມ ເຍີນເຢີນ (Nhân Dân), ວາລະສານ ລາວ-ຫວຽດ (Tạp chí Lào Việt), ໜັງສືພິມ ກົງ ອານ (Báo Công An)

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 18 ໃນສະບັບນີ້

ເຫດການ · 14:57 ໂມງ · ອ່ານ 12 ຄັ້ງ

ຊ່ວຍກັນແຊ! ຄົນຮ້າຍລັກລົດຈັກໄຟຟ້າຢູ່ໜອງພະຍາ ຂີ່ມຸ່ງໜ້າໄປທາງທົ່ງຂັນຄຳເຈົ້າຂອງຕັ້ງລາງວັນນຳຈັບ 10 ລ້ານກີບ!





ຮ້ານ TAILG ໜອງພະຍາ ຂາຍລົດຈັກໄຟຟ້າ ໄດ້ປະກາດແຈ້ງເຕືອນ ແລະ ຂໍຄວາມຊ່ວຍເຫຼືອຈາກສັງຄົມໃນການຕິດຕາມຫາລົດຈັກໄຟຟ້າຂອງທາງຮ້ານທີ່ຖືກຄົນຮ້າຍລັກໄປ ໂດຍມີລາຍລະອຽດດັ່ງນີ້:

ວັນ ແລະ ເວລາເກີດເຫດ: ວັນທີ 25 ພະຈິກ 2026 ເວລາ 09:38 ໂມງ.

ສະຖານທີ່ເກີດເຫດ: ບ້ານໜອງພະຍາ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ.

ເບາะແສຫຼ້າສຸດ: ໃນວັນດຽວກັນ ຊ່ວງເວລາປະມານ 14:00 ໂມງ (2 ໂມງແລງ) ມີພົນລະເມືອງດີພົບເຫັນຜູ້ຕ້ອງສົງໄສຂັບຂີ່ລົດຄັນດັ່ງກ່າວມຸ່ງໜ້າໄປທາງເຂດ ທົ່ງຂັນຄຳ ແລະ ມີພຶດຕິກຳຊອກຖາມຂາຍລົດຕາມທາງ.

ລາງວັນສົມນະຄຸນ: ທາງຮ້ານຍິນດີມອບເງິນສົມນະຄຸນຈຳນວນ 10,000,000 ກີບ ໃຫ້ແກ່ຜູ້ທີ່ໃຫ້ເບາะແສຈົນສາມາດຕິດຕາມລົດຄືນໄດ້.

ແຈ້ງເຕືອນຜູ້ຮັບຊື້: ຂໍໃຫ້ພໍ່ແມ່ປະຊາຊົນ ແລະ ຮ້ານຮັບຊື້-ຂາຍລົດມືສອງ ລະມັດລະວັງຫາກມີບຸກຄົນນຳລົດຈັກໄຟຟ້າໄທຫຼີ່ງລຸ້ນ T72 ສີປອນ ໄປສະເໜີຂາຍໂດຍບໍ່ມີເອກະສານຢັ້ງຢືນທີ່ຖືກຕ້ອງ.

ຊ່ອງທາງຕິດຕໍ່ແຈ້ງເບາะແສ:

ຫາກທ່ານໃດພົບເຫັນລົດ ຫຼື ບຸກຄົນຕາມພາບກ້ອງວົງຈອນປິດ ສາມາດໂທແຈ້ງໄດ້ທັນທີທີ່ເບີ: 020 9797 8289 (TAILG ໜອງພະຍາ).

ທ່ອງທ່ຽວ

ທ່ອງທ່ຽວ · 11:39 ໂມງ · ອ່ານ 6 ຄັ້ງ

ພູມໃຈທັ່ງປະເທດ! “ນ້ຳຕົກຕາດກວາງຊີ” ແຫ່ງຫຼວງພະບາງ ຄວ້າອັນດັບ 1 ນ້ຳຕົກຕາດທີ່ດີທີ່ສຸດໃນອາຊີ ປະຈຳປີ 2026!



ສ້າງຊື່ສຽງ ແລະ ຄວາມພາກພູມໃຈໃຫ້ແກ່ການທ່ອງທ່ຽວລາວອີກຄັ້ງ ເມື່ອເວັບໄຊຈັດອັນດັບ ແລະ ສະຖິຕິຊື່ດັ້ງຢ່າງ Seasia Stats ໄດ້ເຜີຍແຜ່ຜົນການຈັດອັນດັບ "10 ນ້ຳຕົກຕາດທີ່ດີທີ່ສຸດໃນອາຊີ ປະຈຳປີ 2026" (The Best Waterfalls in Asia in 2026) ໂດຍອ້າງອີງຂໍ້ມູນຈາກ Worldworthy 100 ປະຈຳປີ 2026 ເຊິ່ງຜົນປາກົດວ່າ ນ້ຳຕົກຕາດກວາງຊີ (Kuang Si Falls) ແຫ່ງນະຄອນຫຼວງພະບາງ ສປປ ລາວ ສາມາດຄວ້າ ອັນດັບທີ 1 ຮ່ວມ ຂອງອາຊີມາຄອງໄດ້ຢ່າງຍິ່ງໃຫຍ່.

ຄະແນນສູງສຸດເຖິງ 9.43 ຄະແນນ

ໃນການຈັດອັນດັບຄັ້ງນີ້ ນ້ຳຕົກຕາດກວາງຊີ ໄດ້ຮັບຄະແນນສະເລ່ຍສູງເຖິງ 9.43 ຄະແນນ ຂຶ້ນແທ່ນອັນດັບ 1 ຮ່ວມກັບ ນ້ຳຕົກຕາດ Tumpak Sewu ຂອງປະເທດອິນໂດເນເຊຍ ເຊິ່ງໄດ້ຄະແນນເທົ່າກັນ. ຂະນະທີ່ອັນດັບທີ 3 ຕົກເປັນຂອງນ້ຳຕົກຕາດ Banyumala ຈາກອິນໂດເນເຊຍ (9.39 ຄະແນນ) ຕາມມາດ້ວຍນ້ຳຕົກຕາດ Bambarakanda ແລະ Aberdeen ຈາກສີລັງກາ ທີ່ຄອງອັນດັບ 4 ຮ່ວມ (9.37 ຄະແນນ).

ມີນສະເໜ່ແຫ່ງສາຍນ້ຳສີມໍລະກົດ ທີ່ມັດໃຈນັກທ່ອງທ່ຽວທົ່ວໂລກ

ສາເຫດທີ່ເຮັດໃຫ້ນ້ຳຕົກຕາດກວາງຊີໄດ້ຮັບການຍົກຍ້ອງໃຫ້ເປັນນ້ຳຕົກຕາດທີ່ດີທີ່ສຸດໃນອາຊີ ແມ່ນຍ້ອນເອກະລັກອັນໂດດເດັ່ນຂອງສາຍນ້ຳໃສສີຟ້າອົມຂຽວ ມໍລະກົດ ທີ່ໄຫຼລົດຫຼັ່ນລົງມາຕາມຊັ້ນຫີນປູນຫຼາຍຊັ້ນ ທ່າມກາງປ່າໄມ້ທຳມະຊາດອັນຂຽວງາມ ແລະ ອາກາດທີ່ສົດຊື່ນຂອງແຂວງຫຼວງພະບາງ ເຮັດໃຫ້ສະຖານທີ່ແຫ່ງນີ້ກາຍເປັນຈຸດໝາຍປາຍທາງໃນຝັນຂອງນັກເດີນທາງຈາກທົ່ວທຸກມຸມໂລກ.

ສະຫຼຸບ 10 ອັນດັບນ້ຳຕົກຕາດທີ່ດີທີ່ສຸດໃນອາຊີ ປະຈຳປີ 2026:

ນ້ຳຕົກຕາດກວາງຊີ (Kuang Si Falls) - ສປປ ລາວ (9.43 ຄະແນນ) (ອັນດັບ 1 ຮ່ວມ)

ນ້ຳຕົກຕາດ Tumpak Sewu - ອິນໂດເນເຊຍ (9.43 ຄະແນນ) (ອັນດັບ 1 ຮ່ວມ)

ນ້ຳຕົກຕາດ Banyumala - ອິນໂດເນເຊຍ (9.39 ຄະແນນ)

ນ້ຳຕົກຕາດ Bambarakanda - ສີລັງກາ (9.37 ຄະແນນ) (ອັນດັບ 4 ຮ່ວມ)

ນ້ຳຕົກຕາດ Aberdeen - ສີລັງກາ (9.37 ຄະແນນ) (ອັນດັບ 4 ຮ່ວມ)

ນ້ຳຕົກຕາດ Bomburu Ella - ສີລັງກາ (9.34 ຄະແນນ) (ອັນດັບ 6 ຮ່ວມ)

ນ້ຳຕົກຕາດແມ່ຍະ (Mae Ya Waterfall) - ໄທ (9.34 ຄະແນນ) (ອັນດັບ 6 ຮ່ວມ)

ນ້ຳຕົກຕາດ Rainbow - ອິນເດຍ (9.33 ຄະແນນ)

ນ້ຳຕົກຕາດ Darbat - ໂອມານ (9.31 ຄະແນນ) (ອັນດັບ 9 ຮ່ວມ)

ນ້ຳຕົກຕາດ Tortum - ຕວກກີ (9.31 ຄະແນນ) (ອັນດັບ 9 ຮ່ວມ)

ທີ່ມາ:Seasia Stats,

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

ຂ່າວຕ່າງປະເທດ

ຂ່າວຕ່າງປະເທດ · 11:52 ໂມງ · ອ່ານ 29 ຄັ້ງ

ນັບເປັນຄັ້ງທຳອິດ! ອຸນຫະພູມໂລກສ້າງສະຖິຕິໃໝ່ ສູງກວ່າລະດັບກ່ອນຍຸກອຸດສາຫະກຳ 2 ອົງສາ ຕິດຕໍ່ກັນ 6 ມື້



ອຸນຫະພູມສະເລ່ຍລາຍວັນທົ່ວໂລກພຸ່ງສູງຂຶ້ນສ້າງສະຖິຕິໃໝ່ ຫຼັງຈາກພົບວ່າອຸນຫະພູມຜິດໄປຈາກລະດັບສະເລ່ຍກ່ອນຍຸກອຸດສາຫະກຳຫຼາຍກວ່າ 2 ອົງສາເຊລຊຽສ ຕິດຕໍ່ກັນເປັນເວລາ 6 ມື້ ນັບເປັນຄັ້ງທຳອິດທີ່ມີການບັນທຶກປາກົດການດັ່ງກ່າວ.

ອຸນຫະພູມສະເລ່ຍລາຍວັນທົ່ວໂລກພຸ່ງສູງຂຶ້ນສ້າງສະຖິຕິໃໝ່ ໂດຍສູງກວ່າຄ່າສະເລ່ຍກ່ອນຍຸກອຸດສາຫະກຳ 2 ອົງສາເຊລຊຽສ ຕິດຕໍ່ກັນເປັນເວລາ 6 ມື້.

ເມື່ອວັນທີ 25 ພະຈິກ 2026 ລະບຸວ່າ ອຸນຫະພູມຜິດໄປຈາກຄ່າອ້າງອີງລະຫວ່າງປີ 1850–1900 ເກີນ 2 ອົງສາເຊລຊຽສຕິດຕໍ່ກັນ 6 ມື້ ໂດຍໃນວັນທີ 23 ພະຈິກ ອຸນຫະພູມຜິດໄປຈາກຄ່າສະເລ່ຍສູງເຖິງ 2.24 ອົງສາເຊລຊຽສ ສູງກວ່າສະຖິຕິເກົ່າທີ່ 2.05 ອົງສາເຊລຊຽສ ເຊິ່ງບັນທຶກໄວ້ໃນປີ 2023.

ນັກວິທະຍາສາດລະບຸວ່າ ການພຸ່ງສູງຂອງອຸນຫະພູມໃນຄັ້ງນີ້ ເກີດຈາກພາວະໂລກຮ້ອນທີ່ມີສາເຫດຫຼັກຈາກກິດຈະກຳຂອງມະນຸດ ໂດຍສະເພາະການເຜົາໄໝ້ເຊື້ອເພີງຟອດຊິວ ລວມທັງປັດໃຈຈາກປາກົດການເອລນີໂຍ (El Niño) ທີ່ກຳລັງມີກຳລັງແຮງ ແລະຄາດວ່າຈະເຂົ້າສູ່ຈຸດສູງສຸດໃນຊ່ວງລະຫວ່າງນີ້ຫາເດືອນມັງກອນ.

ດ້ານ Samantha Burgess ຜູ້ນຳດ້ານຍຸດທະສາດສະພາບອາກາດຂອງບໍລິການຕິດຕາມສະພາບອາກາດ Copernicus ຂອງສະຫະພາບເອີຣົບ ລະບຸວ່າ ອຸນຫະພູມທີ່ສູງຜິດປົກກະຕິໃນລະດັບນີ້ ສະທ້ອນໃຫ້ເຫັນເຖິງຄວາມຮຸນແຮງຂອງການປ່ຽນແປງສະພາບອາກາດ ແລະລະດັບຄວາມຮ້ອນທີ່ໂລກກຳລັງເຜີຍໃຫ້ເຫັນ.

ຄວາມຮ້ອນທີ່ເພີ່ມຂຶ້ນຍັງສົ່ງຜົນຕໍ່ລະບົບນິເວດ ໂດຍສະເພາະການເກີດພາວະໄພແຫ້ງແລ້ງ ແລະໄຟໄໝ້ປ່າໃນເຂດປ່າດິງດິບເຂດຮ້ອນ ເຊິ່ງອາດສົ່ງຜົນໃຫ້ປ່າໄມ້ມີຄວາມສາມາດໃນການດູດຊັບກາກບອນຫຼຸດລົງ ແລະຊ້ຳເຕີມພາວະໂລກຮ້ອນໃຫ້ຮຸນແຮງຂຶ້ນ.

ຢ່າງໃດກໍຕາມ ນັກວິທະຍາສາດເນັ້ນວ່າ ການທີ່ອຸນຫະພູມລາຍວັນສູງກວ່າ 2 ອົງສາເຊລຊຽສຕິດຕໍ່ກັນ 6 ມື້ ບໍ່ໄດ້ໝາຍຄວາມວ່າໂລກໄດ້ລະເມີດເປົ້າໝາຍຈຳກັດພາວະໂລກຮ້ອນຕາມສັນຍາປາຣີແລ້ວ ເນື່ອງຈາກການກຳນົດລະດັບພາວະໂລກຮ້ອນຕາມສັນຍາດັ່ງກ່າວ ຕ້ອງພິຈາລະນາຈາກຄ່າອຸນຫະພູມສະເລ່ຍໃນໄລຍະຍາວ ບໍ່ແມ່ນພຽງຂໍ້ມູນລາຍວັນ.

ສະຖິຕິດັ່ງກ່າວຈຶ່ງເປັນສັນຍານເຕືອນສຳຄັນຕໍ່ປະຊາຄົມໂລກ ໃຫ້ເລັ່ງຫຼຸດການປ່ອຍອາຍພິດເຮືອນແກ້ວ ພ້ອມທັງວາງມາດຕະການປັບຕົວຮັບມືກັບຄວາມຮ້ອນ ແລະຜົນກະທົບຈາກການປ່ຽນແປງສະພາບອາກາດທີ່ມີແນວໂນ້ມຮຸນແຮງຂຶ້ນໃນອະນາຄົດ.

ທີ່ມາ: The Guardian

◆ ຂ່າວຕ່າງປະເທດ · 13:30 ໂມງ · ອ່ານ 16 ຄັ້ງ

"ທຣຳ" ປະກາດຂຶ້ນພາສີຮອບໃໝ່ 14 ປະເທດຄູ່ຄ້າ "ຫວຽດນາມ" ເລັ່ງປົດດິລຫຼີກລ່ຽງພາສີ 35% ຂະນະທີ່ "ຈີນ-ຍີ່ປຸ່ນ" ອອກໂຮງໂຕ້ຂໍ້ກ່າວຫາ!



ບັນດາປະເທດໃນພາກພື້ນເອເຊຍກຳລັງເຄື່ອນໄຫວຢ່າງໜັກ ເພື່ອຮັບມືກັບມາດຕະການຂຶ້ນພາສີນຳເຂົ້າຮອບໃໝ່ຂອງລັດຖະບານປະທານາທິບໍດີ ໂດນັລ ທຣຳ ແຫ່ງສະຫະລັດອາເມຣິກາ ຫຼັງຈາກສຳນັກງານຜູ້ແທນການຄ້າສະຫະລັດຯ (USTR) ໄດ້ປະກາດແຜນເກັບພາສີຕໍ່ 14 ເຂດເສດຖະກິດຄູ່ຄ້າລາຍໃຫຍ່ ໂດຍອ້າງເຫດຜົນເລື່ອງ "ກຳລັງການຜະລິດສ່ວນເກີນເຊິງໂຄງສ້າງ" ທີ່ສົ່ງຜົນກະທົບຕໍ່ຕະຫຼາດໂລກ.

ຫວຽດນາມ ເລັ່ງປົດດິລການຄ້າ ຫວັງຫຼຸດຄວາມສ່ຽງພາສີ 35%

ສຳລັບປະເທດຫວຽດນາມ ເຊິ່ງເພິ່ງພາຕະຫຼາດສົ່ງອອກໄປສະຫະລັດຯ ເປັນອັນດັບ 1 ຕ້ອງເຜີຍກັບຄວາມທ້າທາຍຢ່າງໜັກ ໂດຍພາຍໃຕ້ຂໍ້ສະເໜີຂອງ USTR ຫາກ

ຫວຽດນາມບໍ່ສາມາດບັນລຸຂໍ້ຕົກລົງທາງການຄ້າກັບວໍຊິງຕັນໄດ້ ອາດຈະຖືກເກັບພາສີສູງເຖິງ 35% ແຕ່ຫາກສາມາດປົດດິລໄດ້ສຳເລັດ ອັດຕາພາສີຈະຖືກຈຳກັດໄວ້ທີ່ 20%. ຫຼ້າສຸດ ລັດຖະບານຫວຽດນາມໄດ້ຍືນຢັນວ່າຈະເຂົ້າຮ່ວມການຊີ້ແຈງໃນທຸກຂັ້ນຕອນ ແລະ ພ້ອມເດີນໜ້າສະກັດກັ້ນການລັກລອບສົ່ງສິນຄ້າຜ່ານປະເທດທີສາມ ຫຼື ການປອມແປງແຫຼ່ງກຳເນີດສິນຄ້າ ເພື່ອເລັ່ງປົດດິລການຄ້າໃຫ້ໄວທີ່ສຸດ.

ຈີນ-ຍີ່ປຸ່ນ ໂຕ້ກັບຂໍ້ກ່າວຫາ ຂະນະທີ່ຫຼາຍປະເທດເລັ່ງເຈລະຈາ

ທາງດ້ານປະເທດເສດຖະກິດຍັກໃຫຍ່ໃນເອເຊຍ ຕ່າງກໍສະແດງທ່າທີບໍ່ເຫັນດີກັບມາດຕະການດັ່ງກ່າວ:

ຈີນ. ຖືກສະເໜີເກັບພາສີເພີ່ມອີກ 20% ຈາກອັດຕາເດີມ (ແລະ ອາດພຸ່ງສູງເຖິງ 40% ຫາກບໍ່ປະຕິບັດຕາມເງື່ອນໄຂ) ເຊິ່ງທາງການຈີນໄດ້ອອກມາປະຕິເສດຂໍ້ກ່າວຫາເລື່ອງການຜະລິດລົ້ນຕະຫຼາດ ແລະ ຊີ້ວ່າເປັນການກີດກັນທາງການຄ້າ.

ຍີ່ປຸ່ນ. ລັດຖະບານຍີ່ປຸ່ນລະບຸວ່າ ຂໍ້ສະເໜີພາສີດັ່ງກ່າວເປັນເລື່ອງທີ່ "ໜ້າເສຍດາຍຢ່າງຍິ່ງ" ໂດຍຍີ່ປຸ່ນ, ເກົາຫຼີໃຕ້, ໄຕ້ຫວັນ ແລະ ສະຫະພາບຢູໂຣບ ຕ່າງກໍຖືກຈັດຢູ່ໃນກຸ່ມອັດຕາພາສີເພດານທີ່ 15% ຕາມຂໍ້ຕົກລົງເດີມ.

ອິນເດຍ ແລະ ອາຊຽນ. ອິນເດຍ (ເຊິ່ງອາດຖືກເກັບສູງສຸດ 25%) ຍືນຢັນພ້ອມເຈລະຈາເພື່ອຫຼຸດພາສີໃຫ້ເຫຼືອ 17% ສ່ວນປະເທດໃນອາຊຽນອື່ນໆ ເຊັ່ນ: ໄທ ແລະ ບັງກະລາເທດ ກໍຕ້ອງເຜີຍກັບຂໍ້ສະເໜີພາສີໃນລະດັບ 18% ເຊັ່ນກັນ.

ຍັງບໍ່ມີຜົນບັງຄັບໃຊ້ທັນທີ

ທັງນີ້ ມາດຕະການພາສີຮອບໃໝ່ຂອງທຣຳ ຍັງຢູ່ໃນຂັ້ນຕອນການຮັບຟັງຄວາມຄິດເຫັນ ແລະ ພິຈາລະນາຂໍ້ມູນເພີ່ມເຕີມ ຈຶ່ງຍັງບໍ່ທັນມີຜົນບັງຄັບໃຊ້ໃນທັນທີ ເຊິ່ງເຮັດໃຫ້ໄລຍະເວລາຕໍ່ຈາກນີ້ກາຍເປັນຊ່ວງເວລາສຳຄັນທີ່ແຕ່ລະປະເທດໃນເອເຊຍຕ້ອງເລັ່ງເປີດໂຕະເຈລະຈາກັບສະຫະລັດຯ ເພື່ອປົກປ້ອງຜົນປະໂຫຍດທາງເສດຖະກິດຂອງຕົນເອງ.

ທີ່ມາ: Channel NewsAsia (CNA), Al Jazeera

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວຕ່າງປະເທດ · 11:37 ໂມງ · ອ່ານ 12 ຄັ້ງ

ພາລະກິດ ເຮຣາ ທີ່ທົດລອງໃຊ້ຍານອະວະກາດພຸ່ງຊົນດາວເຄາະນ້ອຍ ໄດມໍຟອສ ຈະສາມາດຊ່ວຍປ່ຽນເສັ້ນທາງຂອງມັນ ເພື່ອປ້ອງກັນບໍ່ໃຫ້ພຸ່ງຊົນໂລກໄດ້ຫຼືບໍ່?



ດາວເຄາະນ້ອຍ: ໄພຄຸກຄາມຈາກອະວະກາດ ທີ່ມະນຸດກຳລັງຫາວິທີປ້ອງກັນໂລກ

ດາວເຄາະນ້ອຍທີ່ເຄື່ອນທີ່ຢູ່ໃນອະວະກາດ ອາດເປັນໄພຄຸກຄາມສຳຄັນຕໍ່ໂລກ ເນື່ອງຈາກການພຸ່ງຊົນຂອງວັດຖຸອະວະກາດຂະໜາດໃຫຍ່ ອາດສ້າງຄວາມເສຍຫາຍຮ້າຍແຮງໃນລະດັບທ້ອງຖິ່ນ ໄປຈົນເຖິງລະດັບທົ່ວໂລກ. ດ້ວຍເຫດນີ້ ນັກວິທະຍາສາດຈຶ່ງກຳລັງເລັ່ງສຶກສາ ແລະພັດທະນາເຕັກໂນໂລຊີເພື່ອກວດຈັບ ແລະປ່ຽນເສັ້ນທາງຂອງດາວເຄາະນ້ອຍ ກ່ອນທີ່ມັນຈະມີໂອກາດພຸ່ງຊົນໂລກ.

ການທົດສອບທີ່ສຳຄັນໃນດ້ານນີ້ ເກີດຂຶ້ນໃນປີ 2022 ເມື່ອອົງການອະວະກາດສະຫະລັດ (NASA) ສົ່ງຍານອະວະກາດ ດາດ ຊື່ເຕັມ ດັບເບິລ ແອສ ເຕີຣອຍ ເຣດີເຣັກຊັນ ເທສຕ໌ (DART Double Asteroid Redirection Test) ພຸ່ງຊົນດາວເຄາະນ້ອຍ ໄດມໍຟອສ (Dimorphos) ດ້ວຍຄວາມໄວປະມານ 22,000 ກິໂລແມັດຕໍ່ຊົ່ວໂມງ. ການທົດສອບນີ້ມີເປົ້າໝາຍເພື່ອພິສູດວ່າມະນຸດສາມາດໃຊ້ຍານອະວະກາດປ່ຽນແປງວິຖີການໂຄຈອນຂອງດາວເຄາະນ້ອຍໄດ້ຫຼືບໍ່.

ຜົນການທົດສອບປາກົດວ່າ ການພຸ່ງຊົນສາມາດປ່ຽນໄລຍະເວລາການໂຄຈອນຂອງ ໄດມໍຟອສ (Dimorphos) ອ້ອມຮອບດາວເຄາະນ້ອຍ ດິດິມອສ (Didymos) ຈາກເດີມ 11 ຊົ່ວໂມງ 55 ນາທີ ໃຫ້ຫຼຸດລົງປະມານ 33 ນາທີ. ນອກຈາກນີ້ ການພຸ່ງຊົນຍັງເຮັດໃຫ້ເກີດຂຸມຂະໜາດໃຫຍ່ເທິງພື້ນຜິວຂອງດາວ ແລະມີເສດຊາກກະຈັດກະຈາຍອອກໄປໃນອະວະກາດເປັນໄລຍະທາງຫຼາຍພັນກິໂລແມັດ.

ຕໍ່ມາ ອົງການອະວະກາດເອີຣົບ (ESA) ໄດ້ສົ່ງຍານ ເຮລາ (Hera) ເຂົ້າໄປສຳຫຼວດລະບົບດາວເຄາະນ້ອຍ ດິດິມອສ (Didymos) ແລະ ໄດມໍຟອສ (Dimorphos) ຢ່າງໃກ້ຊິດ ເພື່ອສຶກສາຜົນກະທົບຈາກການພຸ່ງຊົນ. ພາບຖ່າຍທີ່ໄດ້ຮັບເປີດເຜີຍໃຫ້ເຫັນລາຍລະອຽດພື້ນຜິວຂອງດາວເຄາະນ້ອຍ ເຊິ່ງມີກ້ອນຫີນຂະໜາດໃຫຍ່ກະຈາຍຢູ່ທົ່ວພື້ນທີ່.

ພາບຈຳລອງສະແດງໃຫ້ເຫັນຍານອະວະກາດ Hera ເຊິ່ງມີດາວທຽມຂະໜາດນ້ອຍ 2 ດວງຕິດຕັ້ງຢູ່ເທິງຍານ ເພື່ອສຶກສາດາວເຄາະນ້ອຍຢ່າງໃກ້ຊິດ.

ນັກວິທະຍາສາດລະບຸວ່າ ແຮງໂນ້ມຖ່ວງຢູ່ພື້ນຜິວຂອງ ດິດິມອສ (Didymos) ຕ່ຳກວ່າແຮງໂນ້ມຖ່ວງເທິງໂລກປະມານ 40,000 ເທົ່າ. ສະພາບດັ່ງກ່າວເຮັດໃຫ້ກ້ອນຫີນຂະໜາດໃຫຍ່ສາມາດວາງຕົວຢູ່ເທິງພື້ນຜິວໄດ້ ໂດຍມີຂະໜາດຕັ້ງແຕ່ 3 ແມັດ ໄປຈົນເຖິງ 10 ແມັດ. ຂໍ້ມູນເຫຼົ່ານີ້ຈະຊ່ວຍໃຫ້ນັກວິທະຍາສາດເຂົ້າໃຈອົງປະກອບ ແລະຄຸນສົມບັດຂອງດາວເຄາະນ້ອຍໄດ້ດີຂຶ້ນ.

ສຳລັບໄພຄຸກຄາມຈາກດາວເຄາະນ້ອຍນັ້ນ ດາວທີ່ມີເສັ້ນຜ່າສູນກາງໃຫຍ່ກວ່າ 1 ກິໂລແມັດ ອາດສ້າງຄວາມເສຍຫາຍຮ້າຍແຮງໃນລະດັບທົ່ວໂລກ. ສ່ວນດາວເຄາະນ້ອຍຂະໜາດກາງ ທີ່ມີຂະໜາດໃກ້ຄຽງກັບ ໄດມໍຟອສ (Dimorphos) ກໍອາດສາມາດທຳລາຍເມືອງໃຫ້ເສຍຫາຍຢ່າງໜັກໄດ້.

ແນວໃດກໍຕາມ ນັກວິທະຍາສາດເຫັນວ່າ ດາວເຄາະນ້ອຍຂະໜາດໃຫຍ່ສ່ວນຫຼາຍທີ່ອາດເປັນໄພຄຸກຄາມໄດ້ຖືກຄົ້ນພົບແລ້ວ ແລະບໍ່ມີດວງໃດກຳລັງມຸ່ງໜ້າມາຊົນໂລກໃນປັດຈຸບັນ. ແຕ່ດາວເຄາະນ້ອຍຂະໜາດກາງບາງສ່ວນຍັງຄົງເປັນສິ່ງທີ່ຕ້ອງຕິດຕາມ ເພາະນັກວິທະຍາສາດຍັງບໍ່ສາມາດກວດພົບພວກມັນໄດ້ທັງໝົດ.

ກ້ອງໂທລະທັດອະວະກາດ Hubble ກວດພົບເສດຊາກຈຳນວນຫຼາຍ ທີ່ກະຈາຍອອກເປັນແນວຍາວຈາກຈຸດທີ່ເກີດການພຸ່ງຊົນດັ່ງກ່າວ.

ເພື່ອເພີ່ມປະສິດທິພາບໃນການກວດຈັບ ໃນປີ 2027 ມີແຜນຈະສົ່ງກ້ອງໂທລະທັດອະວະກາດ Near-Earth Object Surveyor ຫຼື NEO Surveyor ຂຶ້ນສູ່ອະວະກາດ ເພື່ອຄົ້ນຫາ ແລະຕິດຕາມວັດຖຸທີ່ຢູ່ໃກ້ໂລກ.

ນອກຈາກນີ້ ຍັງມີແຜນສົ່ງຍານອະວະກາດໄປສຳຫຼວດດາວເຄາະນ້ອຍ ອາໂພຟິສ (Apophis) ເຊິ່ງມີຄວາມຍາວປະມານ 450 ແມັດ. ດາວດວງນີ້ຖືກຄົ້ນພົບໃນປີ 2004 ແລະເຄີຍຖືກຄາດຄະເນໃນເບື້ອງຕົ້ນວ່າ ອາດມີໂອກາດພຸ່ງຊົນໂລກໃນວັນທີ 13 ເມສາ 2029. ແຕ່ຈາກການສຶກສາວິຖີການໂຄຈອນທີ່ລະອຽດຂຶ້ນ ນັກວິທະຍາສາດຢືນຢັນວ່າ ມັນຈະບໍ່ພຸ່ງຊົນໂລກໃນອີກຢ່າງໜ້ອຍ 100 ປີຂ້າງໜ້າ ແຕ່ຈະເຄື່ອນທີ່ຜ່ານໂລກໃນໄລຍະຫ່າງຈາກພື້ນຜິວປະມານ 32,000 ກິໂລແມັດ ໃນປີ 2029.

ພາລະກິດນີ້ໄດ້ສົ່ງພາບຖ່າຍໃໝ່ຂອງດາວເຄາະນ້ອຍ ໄດມໍຟອສ (Dimorphos) ເຊິ່ງເປັນດາວບໍລິວານຂະໜາດນ້ອຍທີ່ໂຄຈອນອ້ອມຮອບ ດິດິມອສ (Didymos) ກັບຄືນມາ.

ການເຂົ້າໃກ້ໂລກຂອງ Apophis ຈະເປັນໂອກາດສຳຄັນໃຫ້ນັກວິທະຍາສາດສຶກສາດາວເຄາະນ້ອຍຢ່າງໃກ້ຊິດ ໂດຍມີຍານອະວະກາດສອງລຳທີ່ວາງແຜນເດີນທາງໄປສຳຫຼວດ ຄື ໂອຊິຣິສ-ເອເພັກ (OSIRIS-APEX) ຂອງ NASA ແລະ ແຣມຊິສ (Ramses) ເຊິ່ງເປັນພາລະກິດຮ່ວມຂອງອົງການອະວະກາດເອີຣົບ (ESA) ແລະອົງການອະວະກາດຍີ່ປຸ່ນ (JAXA).

ທັງໝົດນີ້ສະທ້ອນໃຫ້ເຫັນວ່າ ການປ້ອງກັນໂລກຈາກດາວເຄາະນ້ອຍບໍ່ແມ່ນເລື່ອງໄກຕົວອີກຕໍ່ໄປ. ການທົດສອບ ດາດ (DART) ແລະພາລະກິດ ເຮລາ (Hera) ກຳລັງຊ່ວຍໃຫ້ມະນຸດເຂົ້າໃຈ

ຕໍ່ໜ້າ 12

ພາລະກິດ ເຮຮາ ທີ່ທົດລອງໃຊ້ຍານອະວະກາດພຸ່ງຊົນດາວເຄາະ... (ຕໍ່ຈາກໜ້າ 11)

ວິທີການປ່ຽນເສັ້ນທາງຂອງດາວເຄາະນ້ອຍ ແລະກຽມພ້ອມຮັບມືກັບໄພຄຸກຄາມຈາກອະວະກາດໃນອະນາຄົດ.

ການຄົ້ນຄວ້າອະວະກາດໃນມື້ນີ້ ຈຶ່ງບໍ່ແມ່ນພຽງເພື່ອສຳຫຼວດຈັກກະວານ ແຕ່ຍັງເພື່ອປົກປ້ອງອະນາຄົດຂອງມະນຸດຊາດອີກດ້ວຍ.

ທີ່ມາ: ESA

◆ ຂ່າວຕ່າງປະເທດ · 15:39 ໂມງ · ອ່ານ 9 ຄັ້ງ

ເກີດເຫດລະເບີດ ແລະ ໄຟໄໝ້ໂຮງກັ່ນນ້ຳມັນ ຊອຍສຸຂຸມວິດ 62 ກຸງເທບຯ ເລັ່ງອົບພະຍົບ ປະຊາຊົນ ແລະ ນັກຮຽນ



ເກີດເຫດລະເບີດ ແລະ ໄຟໄໝ້ຮຸນແຮງຂຶ້ນທີ່ ໂຮງກັ່ນນ້ຳມັນບາງຈາກ ພາຍໃນຊອຍສຸຂຸມວິດ 62 ຖະໜົນສຸຂຸມວິດ ແຂວງພະໂຂນົງໃຕ້ ເຂດພະໂຂນົງ ກຸງເທບມະຫານະຄອນ ປະເທດໄທ ໃນຕອນບ່າຍມື້ນີ້ (26 ພະຈິກ 2026) ເວລາປະມານ 14:51 – 14:58 ໂມງ.

ເບື້ອງຕົ້ນເລັ່ງອົບພະຍົບ ແລະ ກວດກາສະຖານະການ

ຫຼັງຈາກໄດ້ຮັບແຈ້ງເຫດຜ່ານສາຍດ່ວນ 199 ແລະ ສູນວິທະຍຸພະຣາມ ໄດ້ມີລາຍງານສຽງລະເບີດດັງສະໜັ່ນ ພ້ອມກັບກຸ່ມຄວັນສີດຳຂະໜາດໃຫຍ່ ແລະ ແປວໄຟທີ່ສາມາດເບິ່ງເຫັນໄດ້ຈາກໄລຍະໄກ. ທາງຫ້ອງການເຂດບາງນາໄດ້ອອກແຈ້ງເຕືອນໃຫ້ປະຊາຊົນທີ່ຢູ່ໃນພື້ນທີ່ໃກ້ຄຽງຮີບອົບພະຍົບອອກຈາກພື້ນທີ່ໂດຍດ່ວນເພື່ອຄວາມປອດໄພ ຂະນະທີ່ໂຮງຮຽນໂດຍຮອບກໍໄດ້ແຈ້ງເຕືອນໃຫ້ນັກຮຽນຮີບເດີນທາງກັບບ້ານ.

ຄວາມຄືບໜ້າການຄວບຄຸມເຫດການ

ເຈົ້າໜ້າທີ່ສະຖານີດັບເພີງ ແລະ ກູ້ໄພພະໂຂນົງ ພ້ອມດ້ວຍໜ່ວຍງານທີ່ກ່ຽວຂ້ອງໄດ້ເລັ່ງເຂົ້າໄປຍັງຈຸດເກີດເຫດເພື່ອລະງັບເຫດ ແລະ ຄວບຄຸມເພີງ. ໃນໄລຍະທຳອິດ ມີລາຍງານວ່າເຈົ້າໜ້າທີ່ບາງສ່ວນຍັງບໍ່ສາມາດເຂົ້າໄປໃນພື້ນທີ່ດ້ານໃນໄດ້ເນື່ອງຈາກເງື່ອນໄຂການອະນຸຍາດຂອງເຈົ້າຂອງພື້ນທີ່ ແຕ່ຕໍ່ມາມີລາຍງານເພີ່ມເຕີມວ່າກຸ່ມຄວັນ ແລະ ແສງເພີງເລີ່ມຫຼຸດລົງ ໂດຍເຈົ້າໜ້າທີ່ພາຍໃນໂຮງກັ່ນໄດ້ດຳເນີນການ. ທັງນີ້ ສາເຫດທີ່ແທ້ຈິງ ຄວາມເສຍຫາຍ ແລະ ຍອດຜູ້ໄດ້ຮັບບາດເຈັບ ຍັງຢູ່ໃນລະຫວ່າງການກວດສອບ ແລະ ຢືນຢັນຢ່າງເປັນທາງການ.

ທີ່ມາ:Thai PBS, Thairath Online, PPTV HD 36, Amarin TV, POLICETV

◆ ຂ່າວຕ່າງປະເທດ · 15:05 ໂມງ · ອ່ານ 8 ຄັ້ງ

ອິນເດຍ-ເນປານ ເປີດຕົວລົດໄຟຂ້າມຊາຍແດນສາຍໃໝ່ ເຊື່ອມຕໍ່ 2 ເມືອງ ໄລຍະທາງ 600 ກິໂລແມັດ



ອິນເດຍ ແລະ ເນປານ ໄດ້ຮ່ວມກັນເປີດຕົວລົດໄຟ ໂດຍສານຂ້າມຊາຍແດນສາຍໃໝ່ ຊື່ວ່າ ສາຣຢູ-ກົມລາເອັກສ່ເພຣສ (Saryu-Kamala Express) ເຊື່ອມຕໍ່ເມືອງອະໂຍທະຍາ (Ayodhya) ໃນລັດອຸດຕະຣະປະເທດ ຂອງອິນເດຍ ກັບເມືອງຈານັກປູຣ (Janakpur) ຂອງເນປານ ໂດຍມີໄລຍະທາງຫຼາຍກວ່າ 600 ກິໂລແມັດ ໃຊ້ເວລາເດີນທາງປະມານ 19 ຊົ່ວໂມງ.

ຕາມລາຍງານຂອງສຳນັກຂ່າວຕ່າງປະເທດວ່າ: ທ່ານ ບາເລນດຣາ ຊາຫ່ (Balendra Shah) ນາຍົກລັດຖະມົນຕີເນປານ ໄດ້ເດີນທາງຢ້ຽມຢາມອິນເດຍຢ່າງເປັນທາງການ ໃນວັນທີ 22-23 ພະຈິກ ໂດຍໄດ້ຮ່ວມກັບທ່ານ ນະເຣນທຣາ ໂມດີ (Narendra Modi) ນາຍົກລັດຖະມົນຕີອິນເດຍ ເຂົ້າຮ່ວມພິທີເປີດຕົວລົດໄຟ ສາຍໃໝ່ຜ່ານລະບົບທາງໄກ.

ລົດໄຟຂະບວນນີ້ມີກຳນົດໃຫ້ບໍລິການອາທິດລະ 1 ຄັ້ງ ໂດຍເຊື່ອມຕໍ່ສອງເມືອງທີ່ມີຄວາມສຳຄັນທາງສາສະໜາ ແລະປະຫວັດສາດ. ລົດໄຟຈະຈອດຮັບ-ສົ່ງຜູ້ໂດຍສານຕາມສະຖານີຕ່າງໆໃນລະຫວ່າງທາງເກືອບ 10 ສະຖານີ ແລະຄາດວ່າຈະເລີ່ມໃຫ້ບໍລິການເຊີງການຄ້າໃນຊ່ວງທ້າຍເດືອນພະຈິກນີ້.

ນອກຈາກການເປີດຕົວລົດໄຟແລ້ວ ຜູ້ນຳທັງສອງປະເທດຍັງໄດ້ຮ່ວມພິທີເປີດຂົວທາງຫຼວງແຫ່ງໃໝ່ ໃນເມືອງດາຣຊຸລາ (Dharchula) ເຊິ່ງຕັ້ງຢູ່ບໍລິເວນລະຫວ່າງລັດອຸດຕະຣາຂັນ ທາງພາກເໜືອຂອງອິນເດຍ ກັບເນປານ ພ້ອມທັງຮ່ວມວາງສີລາລຶກເລີ່ມກໍ່ສ້າງດ່ານກວດຄົນເຂົ້າເມືອງແບບຄົບວົງຈອນ ຢູ່ເມືອງບັນບາຊາ (Banbasa) ໃນລັດອຸດຕະຣາຂັນ ເຊິ່ງຕິດກັບຊາຍແດນເນປານ.

ການເປີດຕົວລົດໄຟຂ້າມຊາຍແດນສາຍໃໝ່ ພ້ອມກັບການພັດທະນາໂຄງລ່າງຄົມມະນາຄົມອື່ນໆ ຖືເປັນກ້າວສຳຄັນໃນການສົ່ງເສີມການເດີນທາງ, ການທ່ອງທ່ຽວ, ການຄ້າ ແລະການແລກປ່ຽນປະຊາຊົນລະຫວ່າງອິນເດຍກັບເນປານ ໃຫ້ມີຄວາມສະດວກຫຼາຍຂຶ້ນ.

ແຫຼ່ງຂ່າວ: metrorail

ຂ່າວຕ່າງປະເທດ · 14:37 ໂມງ · ອ່ານ 8 ຄັ້ງ

ສຸດສະເທືອນໃຈ! ພໍ່ພະຍາຍາມຊ່ວຍລູກຊາຍ ກ່ອນຈະໝົ່ນຕົກຈາກພູສູງ 152 ແມັດ ໃນລັດ ຄາລິຟໍເນຍ ເສຍຊີວິດ.



ເກີດເຫດສຸດສະເທືອນໃຈ ເມື່ອທ້າວ ກີແຢໂມ ອາເລຮານໂດຣ ບາເຕຣສ ພໍ່ຜູ້ໜຶ່ງ ໝົ່ນຕົກຈາກພູສູງປະມານ 500 ຟຸດ ຫຼື 152 ແມັດ ລົງສູ່ຮ່ອມພູທີ່ມີນ້ຳກ້ອນປົກຄຸມ ຈົນເສຍຊີວິດ ຫຼັງພະຍາຍາມເຂົ້າຊ່ວຍລູກຊາຍທີ່ລື່ນເທິງພື້ນນ້ຳກ້ອນ ໃນຂະນະພາກັນຍ່າງປ່າຢູ່ເທິງພູ ເມົາແບເດັນ-ພາວເວ ໃນລັດຄາລິຟໍເນຍ ປະເທດສະຫະລັດ.

Batres ເປັນຄູຝຶກສອນການແລ່ນອັລຕຣາ (Ultra Running) ທີ່ໄດ້ຮັບໃບຮັບຮອງຈາກສະຖາບັນ United Endurance Sports Coaching Academy (UESCA).

ຕາມຂໍ້ຄວາມທີ່ ເຈນນິເຟ ຫຼານສາວຂອງຜູ້ເສຍຊີວິດ ໂພສລົງໃນເວັບໄຊລະດົມທຶນຊ່ວຍເຫຼືອ ລະບຸວ່າ ໃນຂະນະທີ່ ກີແຢໂມ ພະຍາຍາມຊ່ວຍລູກຊາຍໃຫ້ລຸກຂຶ້ນ ລາວກັບລື່ນເທິງນ້ຳກ້ອນ ແລະຕົກລົງຈາກພູສູງປະມານ 152 ແມັດ ຈົນເສຍຊີວິດ ສ້າງຄວາມໂສກເສົ້າໃຫ້ແກ່ຄອບຄົວຢ່າງຫາທີ່ສຸດ.

ຂະນະທີ່ຄອບຄົວໄດ້ເປີດຮັບບໍລິຈາກຜ່ານເວັບໄຊລະດົມທຶນຊ່ວຍເຫຼືອ ເພື່ອນຳເງິນໄປຊ່ວຍຄ່າຈັດງານສົບ ແລະຄ່າໃຊ້ຈ່າຍອື່ນໆ ໃນຊ່ວງເວລາທີ່ຄອບຄົວກຳລັງປະເຊີນກັບຄວາມສູນເສຍຄັ້ງໃຫຍ່ ໂດຍມີຜູ້ຮ່ວມບໍລິຈາກແລ້ວຫຼາຍກວ່າ 9,350 ໂດລາສະຫະລັດ ຈາກເປົ້າໝາຍ 12,000 ໂດລາ.

ທັງນີ້ ກີແຢໂມ ເປັນຄູຝຶກສອນການແລ່ນລະຍະໄກພິເສດ ທີ່ຕ້ອງອາໄສຄວາມອົດທົນສູງ ຂອງສະຖາບັນຝຶກສອນກິລາຄວາມອົດທົນແຫ່ງສະຫະລັດ ໂດຍໄດ້ຮັບໃບຮັບຮອງໃນວັນທີ 3 ກໍລະກົດ 2025. ລາວມີຄວາມຊ່ຽວຊານໃນການກຽມນັກກິລາສຳລັບການແຂ່ງຂັນແລ່ນລະຍະໄກ ເຊັ່ນ 50 ໄມລ໌, 100 ໄມລ໌ ແລະການແລ່ນຕໍ່ເນື່ອງຫຼາຍມື້.

ນອກຈາກນັ້ນ ລາວຍັງມັກຍ່າງປ່າສຳຫຼວດທຳມະຊາດ ແລະມີທຸລະກິດຈຳໜ່າຍຜະລິດຕະພັນທຳຄວາມສະອາດເກີບກິລາຂອງຕົນເອງ.

ສຳລັບພຸ ເມົາແບເດັນ-ພາວເວ ຕັ້ງຢູ່ໃນເຂດພຸ ຊານກາເບຣຍວ ໃນເຂດປົກຄອງລອສແອນເจลิส ລັດຄາລິຟໍເນຍ ໂດຍຖືກຈັດເປັນໜຶ່ງໃນເສັ້ນທາງຍ່າງປ່າທີ່ມີຄວາມສ່ຽງສູງ ເມື່ອມີນ້ຳກ້ອນ ຫຼືຫິມະປົກຄຸມໃນລະດູໜາວ.

ກ່ອນໜ້ານີ້ ໃນເດືອນທັນວາ 2025 ຍັງເຄີຍເກີດເຫດນັກຍ່າງປ່າ 3 ຄົນເສຍຊີວິດເທິງພູ ເມົາໂບດີ ຈາກສະພາບຫິມະຕົກໜັກ ໃນນັ້ນລວມມີ ມາກັສ ອາເລັກຊານເດີ ຄາຊາໂນວາ ນັກສຶກສາປີທຳອິດ ອາຍຸ 19 ປີ ຈາກມະຫາວິທະຍາໄລ ຊານຕາຄລາຣາ ແລະເປັນຊາວເມືອງ ຊິລບິດ.

ທີ່ມາ: California Post

ຂ່າວຕ່າງປະເທດ · 15:24 ໂມງ · ອ່ານ 7 ຄັ້ງ

ເປີດບົດລາຍງານສຸດສະເທືອນໃຈ! ຊາວເກົາຫຼີເໜືອເຜີຍຄວາມລັບ “ຖືກສອດແນມ-ທຳຮ້າຍ-ຈອງຈຳ” ພຽງເພາະນັບຖືສາສະໜາຄຣິດ!



ອົງກອນສິດທິມະນຸດ Korea Future ໄດ້ເຜີຍແຜ່ບົດລາຍງານການສືບສວນສະບັບໃໝ່ ເຊິ່ງເປີດເຜີຍເລື່ອງລາວສຸດສະເທືອນໃຈຜ່ານຄຳບອກເລົ່າຂອງຜູ້ລອດຊີວິດ ແລະ ຜູ້ແປພັກຊາວເກົາຫຼີເໜືອ ທີ່ລະບຸວ່າ ພວກເຂົາຕ້ອງເຜີຊີວິດກັບການສອດແນມຢ່າງເຂັ້ມງວດ, ການທຳຮ້າຍຮ່າງກາຍ ແລະ ການຖືກຈອງຈຳໃນຄຸກ ພຽງເພາະການນັບຖືສາສະໜາຄຣິດ ແລະ ການພົບເຫັນຄຳພີໄບເບິນ.

ລະບົບການສອດແນມຕັ້ງແຕ່ໄວເດັກ ຈົນເຖິງຊຸມຊົນ

ບົດລາຍງານລະບຸວ່າ ລັດຖະບານເກົາຫຼີເໜືອໄດ້ປູກຝັງຄວາມກຽດຊັງຕໍ່ສາສະໜາຄຣິດຜ່ານລະບົບການສຶກສາຕັ້ງແຕ່ຊັ້ນອະນຸບານ ໂດຍສອນໃຫ້ເດັກນ້ອຍເບິ່ງວ່າ ມິດຊັນນາຣີ (ຜູ້ເຜີຍແຜ່ສາສະໜາ) ເປັນສັດຕູຂອງຊາດ. ນອກຈາກນີ້ ຍັງມີໜ່ວຍງານເປົ້າລະວັງໃນຊຸມຊົນ ທີ່ເອີ້ນວ່າ "ອິນມິນບັນ" (Inminban) ຄອຍສອດແນມ ແລະລາຍງານພຶດຕິກຳທີ່ໜ້າສົງໄສຂອງເພື່ອນບ້ານໃຫ້ເຈົ້າໜ້າທີ່ຮັບຮູ້ ຈົນເຮັດໃຫ້ຜູ້ທີ່ນັບຖືສາສະໜາຄຣິດຕ້ອງລັກລອບອະທິຖານຢ່າງລັບໆ ໂດຍຕ້ອງໃຫ້ລູກຫຼານຄອຍຢືນເຝົ້າຍາມຢູ່ໜ້າບ້ານ.

ຄຳບອກເລົ່າຈາກຄຸກນະລິກ: ພຽງຫຼັບຕາອະທິຖານ ກໍຖືກທຸບຕີ

ຜູ້ລອດຊີວິດຫຼາຍລາຍໄດ້ເລົ່າເຖິງປະສົບການອັນໂຫດຮ້າຍໃນສະຖານທີ່ກັກຂັງ ຫຼັງຈາກຖືກຈັບກຸມ ຫຼື ຖືກສົ່ງຕົວກັບຈາກປະເທດຈີນ:

ລີ ຍອງຈູ (ນາມສົມມຸດ). ເລົ່າວ່າ ໃນຫ້ອງຂັງ ນາງຕ້ອງພະຍາຍາມລືມຕາຢູ່ຕະຫຼອດເວລາ ເພາະທຸກຄັ້ງທີ່ມີຄົນຫຼັບຕາ ລີງ ຜູ້ຄຸມຈະຮ້ອງດ່າ ແລະ ຖາມທັນທີວ່າ "ພວກມຶງກຳລັງອະທິຖານຢູ່ບໍ?" ນາງຕ້ອງຈຳໃຈປະຕິເສດທຸກຂໍ້ກ່າວຫາ ເພາະຫາກຖືກຈັບໄດ້ວ່າເປັນຄຣິດສະຕຽນ ຈະຖືກສົ່ງໄປຄ້າຍກັກກັນນັກໂທດການເມືອງ ແລະ ບໍ່ມີວັນໄດ້ກັບອອກມາອີກ.

ຊຸມິນ (ນາມສົມມຸດ). ອະດີດນັກໂທດໃນແຂວງຮໍາມຍອງໃຕ້ ເປີດເຜີຍວ່າ ນາງເຄີຍເຜີຫຼັບຕາອະທິຖານໃນຫ້ອງຂັງ ຈົນຖືກຜູ້ຄຸມທຸບຕີຢ່າງຮຸນແຮງ ເຮັດໃຫ້ນາງກະດູກຂ້າງຫັກ 2 ຊີ່, ກະດູກໄຫປ່າລ້າ ຫັກ ແລະ ຄາງກະໄຕຫັກ.

ເປັນຫຍັງເກົາຫຼີເໜືອຈຶ່ງຢ້ານສາສະໜາ?

ສາດສະດາຈານ ຄັງ ດົງ-ວານ ຈາກມະຫາວິທະຍາໄລດົງອາ ໃຫ້ທັດສະນະກັບສຳນັກຂ່າວ BBC ວ່າ ອຳນາດຂອງຜູ້ນຳ

ຕໍ່ໜ້າ 14

ເປີດບົດລາຍງານສຸດສະເທືອນໃຈ! ຊາວເກົາຫຼີເໜືອເຜີຍຄວາມ... (ຕໍ່ຈາກໜ້າ 13)

ເກົາຫຼີເໜືອຖືກຍົກຍ້ອງໃຫ້ປຽບເໝືອນ "ພະເຈົ້າ" ດັ່ງນັ້ນ ລັດຖະບານຈຶ່ງບໍ່ອະນຸຍາດໃຫ້ມີພະເຈົ້າອົງອື່ນທີ່ມີອຳນາດ ເໜືອກວ່າຜູ້ນຳ ແລະ ເບິ່ງວ່າເສລີພາບທາງສາສະໜາເປັນໄພຄຸກຄາມໂດຍກົງຕໍ່ຄວາມໝັ້ນຄົງຂອງລະບອບການປົກຄອງ ເຖິງແມ່ນວ່າໃນກຸງປຽງຢາງຈະມີໂບດຢູ່ກໍຕາມ ແຕ່ກໍຖືກເບິ່ງວ່າເປັນພຽງ "ພາບລວງຕາ" ທີ່ຢູ່ພາຍໃຕ້ການຄວບຄຸມຂອງລັດເທົ່ານັ້ນ.

ທີ່ມາ: The Independent, AsiaNews

◆ ຂ່າວຕ່າງປະເທດ · 01:24 ໂມງ · ອ່ານ 7 ຄັ້ງ

ສປ ຈີນ ເນັ້ນໜັກວ່າ ຄວນນຳໃຊ້-ບໍລິຫານວິທະຍາສາດ ເຕັກໂນໂລຊີ ຈະເລີນໃໝ່ ຢ່າງເໝາະສົມ



ວິທະຍຸ ໂທລະພາບ ສູນກາງຈີນ,ວັນທີ 24 ພະຈິກ ນີ້, ທ່ານ ຟູ້ຊິ່ງຜູ້ຕາງໜ້າຖາວອນຂອງ ສປ ຈີນ ປະຈຳ ອົງການສະຫະປະຊາຊາດ ໄດ້ປະກອບຄຳເຫັນ ໃນກອງປະຊຸມ ອະພິປາຍ ເປີດພາຍໃຕ້ຫົວຂໍ້ "ການແກ້ໄຂຄວາມຂັດແຍ້ງ ໃນຍຸກ ແຫ່ງການປ່ຽນແປງ ດ້ານເຕັກໂນໂລຊີ ຢ່າງວ່ອງໄວ" ຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ ໂດຍ ເນັ້ນໜັກວ່າ:ຄວນນຳໃຊ້ ແລະບໍລິຫານວິທະຍາສາດເຕັກໂນ ໂລຊີຈະເລີນໃໝ່ຢ່າງເໝາະສົມ.ທ່ານ ຟູ້ຊິ່ງ ກ່າວວ່າ: ປັດຈຸ ບັນ, ການປະຕິວັດດ້ານວິທະຍາສາດ ເຕັກໂນໂລຊີ ແລະ ການປ່ຽນແປງ ທາງອຸດສາຫະກຳຮອບໃໝ່ ກຳລັງເລັ່ງໄວຂຶ້ນ ເຊິ່ງໄດ້ສ້າງໂອກາດ ແລະສິ່ງທ້າທາຍ ທີ່ບໍ່ເຄີຍມີມາກ່ອນໃຫ້ ແກ່ ສັນຕິພາບ ແລະຄວາມໝັ້ນຄົງສາກົນ. ວິທະຍາສາດ ເຕັກໂນໂລຊີ ຈະເລີນໃໝ່ ເຊັ່ນ:ປັນຍາປະດິດ ແລະ ລະບົບ ທີ່ບໍ່ມີຄົນຂັບ ເປັນຕົ້ນສາມາດກາຍເປັນ ເຄື່ອງມື ໃນການປົກປັກຮັກສາ ສັນຕິພາບ, ທັງສາມາດກາຍເປັນກຳລັງແຮງ ທີ່ເຮັດໃຫ້ ຄວາມຂັດແຍ້ງ ຮຸນແຮງຂຶ້ນ, ຈຸດສຳຄັນ ແມ່ນຂຶ້ນກັບວ່າ ມະນຸດສາມາດນຳໃຊ້ ແລະບໍລິຫານມັນ ດ້ວຍຄວາມຮັບຜິດຊອບ ໄດ້ ຫລື ບໍ່.ທຸກປະເທດຄວນເພີ່ມທະວີ ຄວາມສາມັກຄີ ແລະ ການຮ່ວມມືເພື່ອ ຮັບປະກັນໃຫ້ວິທະຍາສາດ ເຕັກໂນໂລຊີ ຈະເລີນໃໝ່ ພັດທະນາຕາມທິດທາງທີ່ສ້າງ ຄວາມສຸກ ໃຫ້ແກ່ ມວນມະນຸດ ຢ່າງສະ ເໝີຕົ້ນ ສະເໝີປາຍ. ທ່ານ ຟູ້ຊິ່ງ ກ່າວຕື່ມ ວ່າ:ສປ ຈີນ ຍິນດີຮ່ວມມື ກັບທຸກຝ່າຍ, ຮ່ວມກັນສ້າງລະບົບ ການບໍລິຫານ ວິທະຍ າສາດເຕັກໂນໂລຊີທົ່ວໂລກ ທີ່ທ່ຽງທຳ ແລະ ສົມເຫດສົມຜົນເພື່ອເຮັດໃຫ້ການ ປ່ຽນແປງ ທາງດ້ານວິທະຍາສາດ ເຕັກໂນ ໂລຊີ ເພີ່ມແຮງຂັບເຄື່ອນ ທີ່ເຂັ້ມແຂງ ເຂົ້າ ໃນພາລະກິດ ສັນຕິພາບແລະ ການພັດທະ ນາຂອງໂລກ./.

(ບັນນາທິການຂ່າວ: ຕ່າງປະເທດ) ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

◆ ຂ່າວຕ່າງປະເທດ · 11:04 ໂມງ · ອ່ານ 6 ຄັ້ງ

ນ້ຳຖ້ວມເໝືອງຄຳເຖື່ອນໃນອິນໂດເນເຊຍ ເສຍຊີວິດ 13 ຄົນ ອີກ 13 ຄົນຄາດວ່າຍັງຕິດຄ້າງໃຕ້ດິນ



ວັນທີ 26 ພະຈິກ 2026 ເຈົ້າໜ້າທີ່ກູ້ໄພ ອິນໂດເນເຊຍ ເລັ່ງປະຕິບັດການຄົ້ນຫາຄົນງານທີ່ສູນຫາຍ ຫຼັງເກີດເຫດນ້ຳຖ້ວມເໝືອງຄຳຜິດກົດໝາຍ ໃນເຂດໂບກໍ ແຂວງຊວາຕາເວັນຕົກ ປະເທດອິນໂດເນເຊຍ ເຮັດໃຫ້ມີຜູ້ ເສຍຊີວິດແລ້ວ 13 ຄົນ ແລະ ຄາດວ່າຍັງມີຄົນງານອີກ 13 ຄົນຕິດຄ້າງຢູ່ພາຍໃນເໝືອງ.

ເຫດການເກີດຂຶ້ນໃນຊ່ວງກາງຄືນວັນຈັນ ຂະນະທີ່ ຄົນງານກຳລັງຂຸດຄົ້ນຫາເສດທອງຄຳຢູ່ພາຍໃນອຸໂມງເໝືອງ ກ່ອນທີ່ຝົນຕົກໜັກຈະເຮັດໃຫ້ແມ່ນ້ຳ Ciseureuh ເອີ່ ລົ້ນຝັ່ງ ແລະ ນ້ຳໄຫຼທະລັກເຂົ້າຖ້ວມປ່ອງເໝືອງ ເຊິ່ງມີ ຄວາມເລິກປະມານ 100 ແມັດ ໃນເຂດພູທາງຕອນໃຕ້ ຂອງກຸງຈາກາຕາ.

ພາຍຫຼັງເກີດເຫດ ຄົນງານເໝືອງ ແລະ ຊາວບ້ານ ໃນພື້ນທີ່ໄດ້ພະຍາຍາມຊ່ວຍກັນສູບນ້ຳອອກຈາກປ່ອງ ເໝືອງ ແຕ່ສະຖານະການກັບຮຸນແຮງຂຶ້ນ ຈົນບໍ່ສາມາດ ຄວບຄຸມໄດ້. ຕໍ່ມາ ທີມຄົ້ນຫາ ແລະ ກູ້ໄພໄດ້ເຂົ້າມາ ຊ່ວຍເຫຼືອ ໂດຍນຳໃຊ້ເຄື່ອງສູບນ້ຳແບບ ຈຸ່ມໃຕ້ນ້ຳ ເພື່ອລະບາຍນ້ຳອອກຈາກປ່ອງ ເໝືອງ ພ້ອມທັງພະຍາຍາມອຸດຊ່ອງທາງທີ່ ນ້ຳໃຕ້ດິນໄຫຼຊຶມເຂົ້າມາ.

ເຈົ້າໜ້າທີ່ລະບຸວ່າ ການກູ້ໄພເປັນ ໄປດ້ວຍຄວາມຫຍຸ້ງຍາກ ເນື່ອງຈາກ ພາຍໃນເໝືອງມີນ້ຳຖ້ວມຂັງ ຊ່ອງທາງເຂົ້າ ອອກແຄບ ແລະ ສະພາບດິນບໍ່ໝັ້ນຄົງ ເຊິ່ງອາດເປັນອັນຕະລາຍຕໍ່ທັງຜູ້ປະສົບໄພ ແລະ ທີມກູ້ໄພ. ຂະນະທີ່ເຈົ້າໜ້າທີ່ຍັງຄົງ ດຳເນີນການຄົ້ນຫາຜູ້ສູນຫາຍຢ່າງຕໍ່ເນື່ອງ.

ທັງນີ້ ການເຮັດເໝືອງຄຳແບບບໍ່ ເປັນທາງການ ຫຼື ຜິດກົດໝາຍ ພົບເຫັນ ໄດ້ທົ່ວໄປໃນອິນໂດເນເຊຍ ແລະ ເປັນ ແຫຼ່ງລາຍຮັບຂອງປະຊາຊົນຫຼາຍພັນຄົນ. ແຕ່ການຂຸດຄົ້ນໃນລັກສະນະດັ່ງກ່າວມັກ ຂາດມາດຕະການຄວາມປອດໄພ ເຮັດໃຫ້ ຄົນງານຕ້ອງປະເຊີນກັບຄວາມສ່ຽງຈາກ ອຸບັດເຫດ ນ້ຳຖ້ວມ ແລະ ດິນຖະຫຼົ່ມ.

ທີ່ມາ: Reuters / Associated Press (AP), ລາຍງານ ວັນທີ 26 ພະຈິກ 2026.

ຂ່າວຕ່າງປະເທດ · 10:59 ໂມງ · ອ່ານ 6 ຄັ້ງ

“ຄິມ ຈອງອຶນ” ລົງພື້ນທີ່ກວດໂຮງງານຜະລິດອັດສະດຸນິວເຄລຍ ພ້ອມສັ່ງເລັ່ງກຳລັງການຜະລິດ ເຕືອນໃຜປະຕິເສດສະຖານະນິວເຄລຍ ຖືເປັນການປະກາດສົງຄາມ



ສຳນັກຂ່າວສູນກາງເກົາຫຼີ (KCNA) ຂອງທາງການເກົາຫຼີເໜືອ ໄດ້ລາຍງານໃນວັນພະຫັດ (26 ພະຈິກ) ນີ້ ວ່າ ທ່ານ ຄິມ ຈອງອຶນ ຜູ້ນຳສູງສຸດຂອງເກົາຫຼີເໜືອ ໄດ້ເດີນທາງໄປກວດຢ້ຽມສະຖານທີ່ຜະລິດວັດສະດຸນິວເຄລຍ ແລະ ສະຖາບັນວິໄຈອາວຸດນິວເຄລຍ (ໂດຍບໍ່ໄດ້ເປີດເຜີຍທີ່ຕັ້ງ) ເມື່ອວັນພຸດທີ່ຜ່ານມາ ເພື່ອຕິດຕາມຄວາມຄືບໜ້າ ຂອງຍຸດທະສາດການພັດທະນາກອງທັບ.

ເລັ່ງເພີ່ມກຳລັງການຜະລິດ ແລະ ຂະຫຍາຍການນຳໃຊ້

ລະຫວ່າງການລົງພື້ນທີ່ ທ່ານ ຄິມ ຈອງອຶນ ໄດ້ລະບຸ ວ່າ ເກົາຫຼີເໜືອກຳລັງຂະຫຍາຍຂີດຄວາມສາມາດໃນການ ຜະລິດວັດສະດຸນິວເຄລຍຢ່າງເປັນລະບົບ ແລະ ຕໍ່ເນື່ອງ ເພື່ອຍົກລະດັບຄັງອາວຸດນິວເຄລຍຂອງປະເທດໃຫ້ ທັນສະໄໝ ແລະ ເຂັ້ມແຂງຂຶ້ນ. ພ້ອມກັນນີ້ ທ່ານຍັງໄດ້ ເນັ້ນຍ້ຳໃຫ້ພາກສ່ວນທີ່ກ່ຽວຂ້ອງເລັ່ງຂະຫຍາຍການນຳໃຊ້ "ອາວຸດນິວເຄລຍທາງຍຸດທະວິທີ" (Tactical Nuclear Weapons) ໃຫ້ ຄອບຄຸມຫຼາຍພາລະກິດ ແລະ ຫຼາຍພື້ນທີ່ ປະຕິບັດການ ເພື່ອຮັບມືກັບ ສະຖານະການຄວາມໝັ້ນຄົງໃນປັດຈຸບັນ.

ປະກາດກ້ອງ: ໃຜປະຕິເສດສະຖານະນິວເຄລຍ ຖືເປັນການປະກາດ ສົງຄາມ

ຜູ້ນຳເກົາຫຼີເໜືອຍັງໄດ້ສົ່ງສັນຍານທີ່ ແຂງກ້າວໄປຍັງປະຊາຄົມໂລກ ໂດຍ ຢືນຢັນວ່າ ສະຖານະການເປັນປະເທດທີ່ມີ ອາວຸດນິວເຄລຍຂອງເກົາຫຼີເໜືອແມ່ນ "ສິ່ງທີ່ບໍ່ສາມາດຍ້ອນກັບໄດ້" ເນື່ອງຈາກ ໄດ້ຖືກບັນຍັດໄວ້ໃນລັດຖະທຳມະນູນ ແລ້ວ ແລະ ເກົາຫຼີເໜືອຈະບໍ່ສະແຫວງຫາ ການຮັບຮອງຈາກປະເທດໃດທັງສິ້ນ.

"ຄວາມພະຍາຍາມໃດໆ ທີ່ຈະ ປະຕິເສດ ຫຼື ທຳລາຍສະຖານະທາງນິວ ເຄລຍທີ່ບັນຍັດໄວ້ໃນລັດຖະທຳມະນູນ ຂອງພວກເຮົາ ຈະຖືວ່າເປັນການລະເມີດ ອະທິປະໄຕ ແລະ ແຊກແຊງກິດຈະການ ພາຍໃນຢ່າງຮ້າຍແຮງທີ່ສຸດ ເຊິ່ງເກົາຫຼີ ເໜືອຈະຖືວ່ານັ້ນຄື ການປະກາດສົງຄາມ ຢ່າງເປີດເຜີຍ" — ຄິມ ຈອງອຶນ ກ່າວ.

ເບື້ອງຫຼັງຄວາມເຄື່ອນໄຫວ

ການລົງພື້ນທີ່ກວດໂຮງງານນິວ ເຄລຍໃນຄັ້ງນີ້ ຖືເປັນຄັ້ງທີ 4 ຂອງທ່ານ ຄິມ ຈອງອຶນ (ຕໍ່ຈາກເດືອນກັນຍາ 2024, ມັງກອນ 2025 ແລະ ມິຖຸນາ 2026) ແລະ ເກີດຂຶ້ນທ່າມກາງຊ່ວງ ເວລາທີ່ຫຼາຍຝ່າຍກຳລັງຈັບຕາເບິ່ງທ່າທີ ຄວາມສຳພັນລະຫວ່າງເກົາຫຼີເໜືອ ແລະ ສະຫະລັດອາເມຣິກາ ພາຍໃຕ້ການນຳຂອງ ປະທານາທິບໍດີ ໂດນັລ ທຣຳ ທີ່ຫາກໍ່ ເດີນທາງມາຢ້ຽມຢາມພາກພື້ນອາຊີ.

ທີ່ມາ: ສຳນັກຂ່າວສູນກາງເກົາຫຼີ (KCNA), Yonhap News Agency, Reuters, Al Jazeera,

ຂ່າວຕ່າງປະເທດ · 02:22 ໂມງ · ອ່ານ 6 ຄັ້ງ

ອົດສະຕຣາລີ-ສິງກະໂປ ເພີ່ມທະວີຮ່ວມມື ດ້ານເອໄອ-ສິນຄ້າຈຳເປັນ



ສຳນັກຂ່າວຊິນຮວາ ຂອງ ສປຈີນ, ເມື່ອບໍ່ດົນມານີ້, ອົດສະຕຣາລີ ແລະ ສິງກະໂປ ໄດ້ເຫັນດີ ເພີ່ມທະວີ ການ ຮ່ວມມື ດ້ານປັນຍາປະດິດ (AI) ແລະ ການຈັດຫາ ສິນຄ້າ ຈຳເປັນ ພາຍຫລັງ ການພົບປະ ຫາລື ແບບທະວິ ພາຄີ ລະຫວ່າງ ທ່ານ ແອນໂທນີ ອາລບານີສ (Anthony Albanese) ນາຍົກ ລັດຖະມົນຕີ ອົດສະຕຣາລີ ແລະ ທ່ານ ລໍເຣນ ວອງ (Lawrence Wong) ນາຍົກ ລັດຖະມົນຕີ ສິງກະໂປ ຢູ່ນະຄອນຫລວງ ແຄນເບີຣາ ປະເທດອົດສະຕຣາລີ.

ໂດຍຜູ້ນຳ ທັງສອງ ໄດ້ລົງນາມ ໃນຖະແຫລງການ ຮ່ວມ ເພື່ອສົ່ງເສີມ ການຮ່ວມມື ດ້ານການພັດທະນາ ປັນຍາປະດິດ ແລະ ການເຮັດວຽກ ຮ່ວມກັນ ເພື່ອກຳນົດ ແນວທາງ ການຄຸ້ມຄອງ ເອໄອ ໃນລະດັບພາກພື້ນ ແລະ ລະດັບໂລກ ພ້ອມທັງ ຮັບປະກັນວ່າ ເຕັກໂນໂລຊີນີ້ ຈະ ຍັງຄົງ ຢູ່ພາຍໃຕ້ ການຄວບຄຸມຂອງມະນຸດ.

ນອກຈາກນີ້, ທ່ານ ອາລບານີສ ແລະ ທ່ານ ວອງ ຍັງໄດ້ປະກາດ ການເຮັດ ບົດບັນທຶກ ຄວາມເຂົ້າໃຈ (MOU) ສະບັບໃໝ່ ລະຫວ່າງ ສອງປະເທດ ວ່າ ດ້ວຍ ການຮ່ວມມື ດ້ານການຈັດຫາ ສິນຄ້າ ຈຳເປັນ ໂດຍຂໍ້ຕົກລົງ ສະບັບໃໝ່ ນີ້ ເປັນການຂະຫຍາຍ ຂອບເຂດ ການ ຮ່ວມມື ດ້ານຕ່ອງໂສ້ ການສະໜອງ ເຊື້ອ ໄຟ ທີ່ໄດ້ມີ ການລົງນາມ ໄວ້ເມື່ອເດືອນ ກໍລະກົດ ຜ່ານມາ ໃຫ້ກວມເອົາ ກຸ່ມ ສິນຄ້າ ຈຳເປັນອື່ນໆ ເຊັ່ນ: ອາຫານ, ຢາ ແລະ ອຸປະກອນການແພດ./

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ
ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ຂ່າວຕ່າງປະເທດ · 16:11 ໂມງ · ອ່ານ 4 ຄັ້ງ

ສະຫະລັດ ອະນຸມັດ SpaceX ສົ່ງດາວທຽມສູ່ອະວະກາດເຖິງ 1 ລ້ານດວງ ເພື່ອສ້າງສູນຂໍ້ມູນ AI ໃນອະວະກາດ



ສະຫະລັດອາເມລິກາ ຜ່ານຄະນະກຳມະການກຳກັບດູແລກິດຈະການສື່ສານຂອງລັດຖະບານກາງ (FCC) ໄດ້ອະນຸມັດແຜນການຂອງບໍລິສັດ SpaceX ໃຫ້ສາມາດສົ່ງດາວທຽມຂຶ້ນສູ່ວົງໂຄຈອນໄດ້ສູງສຸດ 1 ລ້ານດວງ ເພື່ອພັດທະນາເຄືອຂ່າຍສູນປະມວນຜົນຂໍ້ມູນ ແລະ ປັນຍາປະດິດ (AI) ໃນອະວະກາດ.

ໂຄງການດັ່ງກ່າວມີເປົ້າໝາຍສ້າງສູນຂໍ້ມູນທີ່ໂຄຈອນຢູ່ອ້ອມໂລກ ໂດຍໃຊ້ດາວທຽມຈຳນວນມະຫາສານເປັນໜ່ວຍປະມວນຜົນ ແລະ ສື່ສານຂໍ້ມູນ ເພື່ອຮອງຮັບການຂະຫຍາຍຕົວຂອງເຕັກໂນໂລຊີ AI ທີ່ກຳລັງເພີ່ມຂຶ້ນຢ່າງວ່ອງໄວ.

ຈຸດເດັ່ນຂອງແນວຄິດນີ້ ແມ່ນການນຳໃຊ້ພະລັງງານແສງຕາເວັນໃນອະວະກາດ ເພື່ອຈ່າຍພະລັງງານໃຫ້ລະບົບປະມວນຜົນ ພ້ອມທັງເຊື່ອມຕໍ່ດາວທຽມເຂົ້າຫາກັນຜ່ານເທັກໂນໂລຊີສື່ສານດ້ວຍເລເຊີ ເພື່ອສົ່ງຜ່ານຂໍ້ມູນດ້ວຍຄວາມໄວສູງ.

ຖ້າຫາກໂຄງການນີ້ປະສົບຜົນສຳເລັດ ອາດຊ່ວຍຫຼຸດຂໍ້ຈຳກັດຂອງສູນຂໍ້ມູນທີ່ຕັ້ງຢູ່ເທິງໂລກ ໂດຍສະເພາະດ້ານພື້ນທີ່ ແລະ ການຈັດຫາພະລັງງານ ພ້ອມທັງເປີດໂອກາດໃໝ່ໃຫ້ແກ່ການພັດທະນາ AI ໃນອະນາຄົດ.

ແນວໃດກໍຕາມ ໂຄງການນີ້ຍັງມີສິ່ງທ້າທາຍຫຼາຍດ້ານ ເຊັ່ນ ຕົ້ນທຶນການສົ່ງດາວທຽມຂຶ້ນສູ່ອະວະກາດ, ການລະບາຍຄວາມຮ້ອນຂອງອຸປະກອນປະມວນຜົນ, ຄວາມສ່ຽງຈາກຂີ້ເຫຍື້ອອະວະກາດ ແລະ ຜົນກະທົບຕໍ່ການສັງເກດດວງດາວທາງດາລາສາດ.

ການອະນຸມັດຄັ້ງນີ້ຖືເປັນອີກກ້າວສຳຄັນຂອງອຸດສາຫະກຳອະວະກາດ ແລະ AI ເພາະສະທ້ອນໃຫ້ເຫັນວ່າ ການແຂ່ງຂັນດ້ານເຕັກໂນໂລຊີໃນອະນາຄົດອາດບໍ່ໄດ້ຈຳກັດຢູ່ແຕ່ເທິງພື້ນໂລກ ແຕ່ອາດຂະຫຍາຍໄປສູ່ການສ້າງໂຄງສ້າງພື້ນຖານຄອມພິວເຕີ ແລະ AI ໃນອະວະກາດອີກດ້ວຍ.

ທີ່ມາ: Reuters/ABC

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 18 ໃນສະບັບນີ້

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ໂຄສະນາ

EMERGING DIGITAL SOLUTIONS

ແນວຄິດ → ອອກແບບ → ເປີດໃຊ້ງານ

ຮັບອອກແບບ ແລະ ພັດທະນາ ເວັບໄຊທ໌ · ແອັບ · ລະບົບທຸລະກິດ

ທ່ານມີແນວຄິດ?
ພວກເຮົາຊ່ວຍສ້າງໃຫ້ເປັນຈິງ

ບໍ່ວ່າທ່ານຢາກເຮັດລະບົບຫຍັງ , ພວກເຮົາຊ່ວຍໃຫ້ຄຳປຶກສາ ແລະ ສ້າງໃຫ້ເປັນຈິງໄດ້



ສິ່ງທີ່ພວກເຮົາສ້າງໃຫ້ທ່ານ

- ເວັບໄຊທ໌ທຸລະກິດ
- ເວັບແອັບ
- ແອັບມືຖື
- ຮ້ານຄ້າອອນລາຍ
- ລະບົບ CRM
- ລະບົບ ERP
- ປລັກອິນ & API
- ໂຊລູຊັນ AI

ຕິດຕໍ່ໄດ້ເລີຍ, ໃຫ້ຄຳປຶກສາຟຣີ

020 58886182

← ສະແກນ QR ເພື່ອແຊັດ WhatsApp · eds.la

ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ

ວັນສຸກ 27 ພະຈິກ 2026 · ສະບັບທີ 031

ສະໜັບສະໜຸນໂດຍ [ແບຣນຂອງທ່ານ] · ພື້ນທີ່ນີ້ວ່າງ — ໜ້າຂໍ້ມູນທີ່ຄົນເປີດເບິ່ງທຸກມື້ WhatsApp 020 5888 6182

ລາຄານ້ຳມັນ 18 ແຂວງ

ກີບ/ລິດ · ມີຜົນ 26/11/2026

ແຂວງ	ແອັດຊັ່ງ 95	ທຳມະດາ 91	ກາຊວນ
ນະຄອນຫຼວງວຽງຈັນ	**▼ 34,340**	**▼ 29,560**	**▼ 29,520**
ແຂວງວຽງຈັນ	▼ 34,340	▼ 29,560	▼ 29,520
ຜົ້ງສາລີ	▼ 35,330	▼ 30,550	▼ 30,510
ຫຼວງນ້ຳທາ	▼ 34,830	▼ 30,060	▼ 30,010
ອຸດົມໄຊ	▼ 35,010	▼ 30,230	▼ 30,190
ບໍ່ແກ້ວ	▼ 34,440	▼ 29,660	▼ 29,620
ຫຼວງພະບາງ	▼ 34,850	▼ 30,070	▼ 30,030
ຫົວພັນ	▼ 34,850	▼ 30,070	▼ 30,030
ໄຊຍະບຸລີ	▼ 34,660	▼ 29,890	▼ 29,850
ຊຽງຂວາງ	▼ 34,540	▼ 29,750	▼ 29,710
ໄຊສົມບຸນ	▼ 34,760	▼ 29,980	▼ 29,950
ບໍລິຄຳໄຊ	▼ 34,390	▼ 29,610	▼ 29,570
ຄຳມ່ວນ	▼ 34,370	▼ 29,590	▼ 29,550
ສະຫວັນນະເຂດ	▼ 34,370	▼ 29,590	▼ 29,550
ສາລະວັນ	▼ 34,620	▼ 29,850	▼ 29,810
ເຊກອງ	▼ 34,620	▼ 29,840	▼ 29,810
ຈຳປາສັກ	▼ 34,400	▼ 29,620	▼ 29,580
ອັດຕະປື	▼ 34,670	▼ 29,890	▼ 29,850

ແຫຼ່ງ: ລາຍງານລາຄາ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ · mahaxan.com/today/fuel · ▲ ຂຶ້ນ ▼ ລົງ ທຽບກັບລາຄາກ່ອນ (12/11)

ປະຕິທິນ

ວັນສຳຄັນ ທີ່ໃກ້ມາເຖິງ

02/12		ວັນສະຖາປະນາ ສປປ ລາວ · ວັນພຣະ
09/12		ວັນພຣະ
10/12		ເດືອນຈຽງ
13/12		ວັນຄ້າຍວັນເກີດ ປະທານ ໄກສອນ ພົມວິຫານ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ອັດຕາແລກປ່ຽນ

ກີບ · BCEL 26/11/2026

ສະກຸນເງິນ	ຊື້ (ເງິນສົດ)	ຂາຍ
USD ໂດລາ ສະຫະລັດ	▲ 22,348	▲ 22,683
THB ບາດ ໄທ	▼ 665.15	▼ 678.43
CNY ຢວນ ຈີນ	▲ 3,348	▲ 3,414
EUR ເອີໂຣ	▲ 24,426	▲ 24,911
VND ດົ່ງ ຫວຽດນາມ	0.86	0.87
JPY ເຢັນ ຍີ່ປຸ່ນ	▲ 139.85	▲ 142.62
SGD ໂດລາ ສິງກະໂປ	▼ 16,979	▼ 17,651
GBP ປອນ ອັງກິດ	▲ 29,193	▲ 29,771

ສະເລ່ຍທະນາຄານ (ທຫລ): USD ຊື້ 22,459 · ຂາຍ 22,682 · ▲ ຂຶ້ນ ▼ ລົງ ທຽບກັບມື້ກ່ອນ

ລາຄາຄຳ

ກີບ · ຂາຍ

ຄຳແທ່ງ 1 ບາດ

40,350,000

▲ 90,000

ຄຳແທ່ງ 99.99% · 1 ກຣາມ

2,653,600

▲ 31,000

ອັບເດດ 27/11 05:30 · mahaxan.com/today/gold

ຫວຍພັດທະນາ

ງວດ 205

ອອກວັນທີ 26/11/2026

117823

ງວດ 204 · 25/11	261801
ງວດ 203 · 24/11	230179
ງວດ 202 · 23/11	575791
ງວດ 201 · 20/11	603947

ພະຍາກອນອາກາດ

ວັນສຸກ 27 ພະຈິກ 2026

ເມືອງ	ຕ່ຳ–ສູງ	ສະພາບ
ວຽງຈັນ	20.9–29.3°C	ເມກບາງສ່ວນ
ຫຼວງພະບາງ	18.4–26.0°C	ເມກບາງສ່ວນ
ໂພນສະຫວັນ	13.7–21.8°C	ເມກບາງສ່ວນ
ຊຳເໜືອ	12.0–19.2°C	ເມກບາງສ່ວນ
ສະຫວັນນະເຂດ	21.1–27.3°C	ມີເມກຫຼາຍ
ປາກເຊ	23.6–29.2°C	ເມກບາງສ່ວນ

ແຫຼ່ງ: MET Norway · ຂໍ້ມູນສົດ: mahaxan.com/today

ຕົວເລກປ່ຽນທຸກມື້ — ເບິ່ງສົດ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ ອັບເດດສົດ ທີ່ mahaxan.com/today

ແຈ້ງການ

ເມືອງປາກຊ່ອງ ອອກແຈ້ງການເຂັ້ມງວດ! ຫ້າມໃຫ້ປະຊາຊົນເຂົ້າໄປຫາກິນໃນເຂດອ່າງຮັບນ້ຳເຂື່ອນໄຟຟ້ານ້ຳປາກຊ່ອງໂດຍບໍ່ໄດ້ຮັບອະນຸຍາດ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ ປາກຊ່ອງ
ຄະນະກຳມະການປົກຄອງເມືອງ

ເລກທີ 572/ຄປມ
ປາກຊ່ອງ, ວັນທີ 23 ຕຸລາ 2026

ແຈ້ງການ

ເຖິງ: ປະທານຄະນະກຳມະການປົກຄອງຕາແສງ 5 ຕາແສງ, ປະທານ 88 ບ້ານ, ພະນັກງານ - ລັດຖະກອນ, ທະຫານ, ຕຳຫຼວດ, ບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດ, ຜູ້ປະກອບການ ຕະຫລອດຮອດ ພໍ່ແມ່ປະຊາຊົນ ໃນທົ່ວເມືອງປາກຊ່ອງ.

ເລື່ອງ: ການເຂົ້າໄປທຳມາຫາກິນ ຢູ່ເຂດອ່າງຮັບນ້ຳຂອງເຂື່ອນໄຟຟ້ານ້ຳປາກຊ່ອງ ທີ່ບໍ່ໄດ້ຮັບອະນຸຍາດຈາກ ພາກສ່ວນທີ່ກ່ຽວຂ້ອງ.

- ອີງຕາມ ມາດຕາ 36, 37, ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 78 / ສພຊ, ລົງວັນທີ 20 ມີນາ 2025.
- ອີງຕາມ ກົດໝາຍວ່າດ້ວຍ ສັດນ້ຳ ແລະ ການປະມົງ ສະບັບເລກທີ 41 / ສພຊ, ລົງວັນທີ 17 ກໍລະກົດ 2023
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019.

ໃນປະຈຸບັນໃນປະເທດລາວເຮົາເວົ້າລວມ, ເວົ້າສະເພາະໃນແຂວງ ກໍ່ຄືໃນທົ່ວເມືອງ, ປະຊາຊົນໃນຫຼາຍທ້ອງຖິ່ນແມ່ນໄດ້ຫາປາແບບຊະຊາຍ ຝ່າຝືນຕໍ່ລະບຽບກົດໝາຍເຊັ່ນ: ການຈັບກົບ-ຂຽດ ໃນລະດູການວາງໄຂ່, ການນຳໃຊ້ ເຄື່ອງມືຫາປາແບບດັບສູນ, ໃຊ້ໄຟຟ້າຊ໊ອດ, ຫາດເຄມີ, ອວນ, ຫລີ, ຈີບ ແລະ ເຄື່ອງມືອື່ນໆ ທີ່ມີລັກສະນະແບບດັບສູນ, ເພື່ອສະກັດກັ້ນການຈັບປາຕາມທຳມະຊາດ ແລະ ລະດູປາຂຶ້ນວາງຕາມແຫລ່ງນ້ຳທຳມະຊາດ ໂດຍສະເພາະຕາມ ນ້ຳສາຂາ ແລະ ເຂດທີ່ຢູ່ອາໄສຂອງປາ ແຫລ່ງນ້ຳທຳມະຊາດ ໃນອ່າງຮັບນ້ຳເຂື່ອນໄຟຟ້ານ້ຳປາກຊ່ອງ. ນອກນັ້ນ, ຍັງມີການລະເມີດຫາປາຢູ່ໃນເຂດຫວງຫ້າມ, ຍ້ອນມີປະກົດການຄືແນວນັ້ນ ເພື່ອເຮັດໃຫ້ການຄຸ້ມຄອງວຽກງານປະມົງໜ້າເຂື່ອນໄດ້ເຂົ້າສູ່ ລະບຽບຫລັກການ ແລະ ຜັນຂະຫຍາຍ ບັນດາລະບຽບກົດໝາຍຕ່າງໆ ໃຫ້ມີຜົນສັກສິດ ປະກົດຜົນເປັນຈິງ ແນໃສ່ເຮັດໃຫ້ພໍ່ແມ່ປະຊາຊົນມີ ຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ, ຮັບປະກັນເຖິງ ຄວາມປອດໄພຂອງພໍ່ແມ່ປະຊາຊົນໃນລະດູຝົນ ຕິດ ພັນກັບວຽກງານປ້ອງກັນຄວາມສະຫງົບໃນ ຂອບເຂດອ່າງຮັບນ້ຳຂອງເຂື່ອນໄຟຟ້ານ້ຳປາກຊ່ອງ, ໃຫ້ຄຽງຄູ່ກັບການ ປົກປັກຮັກສາ - ພັດທະນາ ປ່າໄມ້, ສັດນ້ຳ - ສັດປ່າ ແລະ ການປະມົງ ໃຫ້ມີ ຄວາມຍືນຍົງຕະຫລອດໄປ.

ຄະນະກຳມະການປົກຄອງເມືອງປາກຊ່ອງ ອອກແຈ້ງການ ດັ່ງນີ້:

1. ຫ້າມບໍ່ໃຫ້ບຸກຄົນ, ນິຕິບຸກຄົນ, ພໍ່ແມ່ປະຊາຊົນ ແລະ ພາກສ່ວນອື່ນໆ ເຂົ້າໄປໃນ ຂອບເຂດທີ່ທາງພາກລັດ ກຳນົດເປັນເຂດປົກປັກຮັກສາປະມົງໜ້າເຂື່ອນໄຟຟ້ານ້ຳປາກຊ່ອງ ຢ່າງເດັດຂາດ.

2. ບຸກຄົນ ຫລື ພໍ່ແມ່ປະຊາຊົນ ທີ່ຈະເຂົ້າຫາປາ ໃນຈຸດອ່າງປະມົງໜ້າ ເຂື່ອນໄຟຟ້ານ້ຳປາກຊ່ອງ ແມ່ນຕ້ອງໄດ້ ຮັບ ອະນຸຍາດຈາກຂະແໜງການ ຄຸ້ມຄອງປະມົງໜ້າເຂື່ອນກ່ອນ, ຖ້າ ຝ່າຝືນແມ່ນຈະໄດ້ປະຕິບັດຕາມກົດ ລະບຽບ ຂອງກົດໝາຍປະມົງ ຢ່າງເຂັ້ມ ງວດ.

3. ຫ້າມນຳເອົາອຸປະກອນຫາປາທີ່ ຜິດກົດໝາຍ ເຂົ້າໄປຫາປາຢູ່ອ່າງປະມົງ ໜ້າເຂື່ອນໄຟຟ້ານ້ຳປາກຊ່ອງ ຢ່າງເດັດ ຂາດ ຖ້າພົບເຫັນແມ່ນຈະໄດ້ປະຕິບັດ ຕາມລະບຽບກົດໝາຍ.

4. ຫ້າມເອົາເຮືອສ່ວນບຸກຄົນ ເພື່ອນຳໃຊ້ເຂົ້າໃນການລາກແກ່ໄມ້, ເຮັດ ກິດຈະກຳອື່ນໆ ຫລື ຫາປາໂດຍບໍ່ໄດ້ຮັບ ອະນຸຍາດ ຖ້າພົບເຫັນ ແລະ ຝ່າຝືນ ແມ່ນຈະປະຕິບັດຕາມລະບຽບກົດໝາຍ ທີ່ວາງອອກ.

5. ມອບໃຫ້ຫ້ອງການກະສິກຳ ແລະສິ່ງແວດລ້ອມ ເມືອງປາກຊ່ອງ, ຂະແໜງການທີ່ກ່ຽວຂ້ອງຂອງເມືອງ, ບໍລິສັດ ເຂື່ອນໄຟຟ້ານ້ຳປາກຊ່ອງ, ການ ຈັດຕັ້ງບ້ານທີ່ກ່ຽວຂ້ອງ ປະສານສົມທົບ ກັນ ກຳນົດເຂດປັກຫລັກໝາຍ, ປ້າຍ ຫ້າມ, ສ້າງລະບຽບຄຸ້ມຄອງແບບມີ ສ່ວນຮ່ວມ ແລະ ຄຸ້ມຄອງໃຫ້ເຂົ້າສູ່ ລະບຽບທີ່ວາງໄວ້.

6. ຫ້າມບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ມີພຶດຕິກຳດັ່ງນີ້:

- ຈັບ, ລ່າ ແລະ ຊື້ຂາຍສັດນ້ຳ - ສັດປ່າ, ກົບ-ຂຽດ ປະເພດຫວງຫ້າມໃນ ທຸກລະດູການຢ່າງເດັດຂາດ.
- ນຳເອົາສັດນ້ຳ - ສັດປ່າປະເພດ ຫວງຫ້າມ ບັນຊີ I ທີ່ຍັງມີຊີວິດ, ຊາກ ແລະ ອະໄວຍະວະຂອງສັດປະເພດ ດັ່ງ ກ່າວນີ້ອອກຈາກຖິ່ນທີ່ຢູ່ອາໄສ ຫລື ແຫລ່ງກຳເນີດມີໄວ້ໃນຄອບຄອງ.
- ຈັບ, ລ່າສັດນ້ຳ-ສັດປ່າປະເພດ ທີ່ອໄປໃນສະຖານທີ່ຫວງຫ້າມ, ເຂດ ອະນຸລັກພັນສັດ, ເຂດປ່າຂຶ້ນວາງໄຂ່, ເຂດວັງສະຫງວນ ໂດຍສະເພາະໃນຊ່ວງ ລະດູການຂະຫຍາຍພັນ.
- ບຸກລຸກທຳລາຍເຂດອະນຸລັກ ພັນສັດ, ວັງສະຫງວນ, ຖິ່ນທີ່ຢູ່ອາໃສ ແຫຼ່ງອາຫານຂອງສັດນ້ຳ - ສັດປ່າໂດຍກົງ ຫລື ທາງອ້ອມ ເຊັ່ນ: ດ້ວຍການບຸກ ເບີກ, ຕັ້ງຖິ່ນຖານໃໝ່, ຖາກຖາງປ່າໄມ້, ຈູດປ່າ, ຕັດໄມ້, ນ້ຳໃຊ້ຢາປາບ ສັດຕູພືດ ແລະ ຢາຂ້າຫຍ້າເກີນກຳນົດ ແລະ ການ ກະທຳອື່ນໆທີ່ບໍ່ຖືກຕ້ອງຕາມລະບຽບ ກົດໝາຍ.
- ຈັບຈ່ອງ, ຍ້າຍ, ປ່ຽນແປງ ຫລື ທຳລາຍເຄື່ອງໝາຍເຂດວັງສະຫງວນ, ເຂດອະນຸລັກພັນສັດ, ເຂດປ່າສະຫງວນ ແລະ ຖິ່ນອາໄສ.
- ຕັນທາງທຽວປາຂຶ້ນວາງໃສ່ຕາມ ຫ້ວຍ ແລະ ສາຍນ້ຳດ້ວຍວິທີການເຮັດ ຕ້ອນ, ເຮັດຫລີ່, ໃສ່ລອບ, ໂຕ່ງ, ມອງ ຕາຖີ່, ນຳໃຊ້ລະເບີດ, ຫາດເບື່ອ, ສານ ເຄມີ, ໃຊ້ໄຟຟ້າຊ໊ອດ ແລະ ເຄື່ອງມືຫາ ປາທີ່ມີລັກສະນະດັບສູນ.
- ມີການກະທຳອື່ນໆ ທີ່ເປັນການ ຜິດລະບຽບກົດໝາຍກ່ຽວກັບສັດນ້ຳ-ສັດປ່າ ແລະ ການປະມົງ.

7. ຖ້າກໍລະນີຍັງມີບຸກຄົນ, ນິຕິ ບຸກຄົນ, ພໍ່ແມ່ປະຊາຊົນຍັງຝ່າຝືນເຂົ້າໄປ ຫາກິນໃນອ່າງຮັບນ້ຳເຂື່ອນໄຟຟ້ານ້ຳ ປາກຊ່ອງ, ຖ້າເກີດອຸປະຕິເຫດຫລື ເຫດການບໍ່ຄາດຄິດຂຶ້ນ ທາງເຂື່ອນໄຟຟ້າ ນ້ຳປາກຊ່ອງຈະບໍ່ຮັບຜິດຊອບ.

8. ມອບໃຫ້ປະທານຄະນະ ກຳມະການປົກຄອງຕາແສງ 5 ຕາແສງ, ປະທານບ້ານ 88 ບ້ານ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ ກ່ຽວຂ້ອງ ຈັດຕັ້ງເຜີຍແຜ່ແຈ້ງການ ສະບັບນີ້ ໃຫ້ທຸກພາກສ່ວນເຂົ້າໃຈຢ່າງ ຖ້ວນເຖິງ.

ໂຄສະນາ

ເຂົ້າເຖິງຜູ້ອ່ານຄົນລາວ ທຸກເຊົ້າ

ໜ້າຫຼັງ ແມ່ນໜ້າທີ່ເຫັນທຸກຄັ້ງທີ່ປິດໜັງສືພິມ. ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ.

ເບິ່ງລາຄາ: mahaxan.com/media-kit

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ມະຫາສານ ລາຍວັນ ຈັດພິມໂດຍ ມະຫາສານ (mahaxan.com) · 302/3B ຊັ້ນ 3 ອາຄານວຽງວັງ, ຖະໜົນບໍລິຈັນ, ນະຄອນຫຼວງວຽງຈັນ · info@mahaxan.com · WhatsApp +856 20 5888 6182
ຂ່າວໃນສະບັບນີ້ ເຜີຍແຜ່ໃນ mahaxan.com ວັນພະຫັດ 26 ພະຈິກ 2026. ສຳເນົາ PDF ນີ້ໃຫ້ໝຸນໃຊ້ຟຣີ ໂດຍບໍ່ດັດແກ້ເນື້ອໃນ.